# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

12-16 ພຶດສະພາ 2022
ປີທີ 11
ສະບັບທີ 843


## ປະທານ ສພຊ ໃຫ້ສຳພາດກ່ຽວກັບປີສາມັກຄີມິດຕະພາບ ລາວ-ຫວຽດນາມ

ໃນວັນທີ 13 ພຶດສະພາ 2022; ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ໃຫ້ສຳພາດແກ່ສື່ມວນຊົນລາວ ແລະ ສື່ມວນຊົນ ສສ.ຫວຽດນາມ ກ່ຽວກັບປີສາມັກຄີມິດຕະພາບ ລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2022 ເຊິ່ງສະຫາຍໄດ້ໃຫ້ສຳພາດວ່າ: ໃນນາມຕາງໜ້າຄະນະພັກ, ຄະນະປະຈຳສະພາແຫ່ງຊາດ ແຫ່ງ ສປປລາວ ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງຍິ່ງທີ່ໄດ້ມີໂອກາດໃຫ້ສຳພາດກ່ຽວກັບຂະບວນການສ້າງກິດຈະກຳຕ່າງໆ ເພື່ອສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2022 ກໍຄືການສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ (5/9/1962-5/9/2022) ຄົບຮອບ 60 ປີ ແລະ ການເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລະຫວ່າງ ລາວ-ຫວຽດນາມ (18/7/1977-18/7/2022) ຄົບຮອບ 45 ປີ ຂອງສະພາແຫ່ງຊາດ.



ປະຊາຊົນສອງຊາດລາວ-ຫວຽດນາມ ມີມູນເຊື້ອພົວພັນສາມັກຄີພິເສດນຳກັນເປັນເວລາດົນນານມາແລ້ວ ເຊິ່ງປະທານ ໂຮ່ ຈີ ມິງ ຜູ້ຍິ່ງໃຫຍ່, ປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ ທີ່ແສນເຄົາລົບຮັກ ໄດ້ເປັນຜູ້ສ້າງ, ຖະນຸຖະໜອມສາຍພົວພັນນີ້ ຈົນກາຍເປັນມໍລະດົກລວມອັນລ້ຳຄ່າ, ເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວ ຂອງແຕ່ລະປະເທດ, ເປັນໜຶ່ງໃນປັດໄຈຕັດສິນໄຊຊະນະຂອງການປະຕິວັດຂອງແຕ່ລະປະເທດ ແລະ ມາໃນໄລຍະໃໝ່ສາຍພົວພັນແບບພິເສດ ພວມໄດ້ຮັບການເສີມຂະຫຍາຍ ທັງລວງກວ້າງ ແລະ ລວງເລິກ, ນຳພາຜົນປະໂຫຍດຕົວຈິງ ມາໃຫ້ແກ່ປະຊາຊົນນັບມື້ນັບຫລາຍຂຶ້ນ.

ສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ໄດ້ປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍ

ອ່ານຕໍ່ໜ້າ 3



### ແຈ້ງການ
### ຂອງຄະນະເລຂາທິການສະພາແຫ່ງຊາດ

ໂດຍຕອບສະໜອງຕາມຄຳເຊີນຂອງສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ, ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະຫາຍ ເວືອງ ດິ່ງ ເຫວະ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດສັງຄົມນິຍົມຫວຽດນາມ ພ້ອມຄະນະຜູ້ແທນຂັ້ນສູງ ຂອງສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ຈະເດີນທາງມາຢ້ຽມຢາມສັນຖະວະໄມຕີ ຢ່າງເປັນທາງການ ທີ່ ສປປລາວ ໃນລະຫວ່າງວັນທີ 15-17 ພຶດສະພາ 2022.

ຜູ້ແທນປະຊາຊົນ

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ສະໄໝວິສາມັນ ປະຈຳເດືອນພຶດສະພາ



ໜ້າ 2

## ປະທານສະພາແຫ່ງຊາດ ເນັ້ນໃຫ້ແຂວງສາລະວັນ ສ້າງອາຊີບ ແລະ ລາຍຮັບອັນໝັ້ນຄົງໃຫ້ປະຊາຊົນ

(ສພຊ) ໃນວັນທີ 6 ພຶດສະພາຜ່ານມາ, ທີ່ສະໂມສອນແຂວງສາລະວັນ, ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມ ແລະ ພົບປະໂອ້ລົມ ຄະນະພັກ, ອົງການປົກຄອງແຂວງສາລະວັນ ໂດຍການຕ້ອນຮັບຂອງທ່ານ ສີເຣັງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະປະຈຳພັກແຂວງ, ຄະນະປະຈຳສະພາປະ

ອ່ານຕໍ່ໜ້າ 3




## ເຫດການສຳຄັນໃນປະຫວັດສາດ ລາວ-ຫວຽດນາມ

ລາວ-ຫວຽດນາມ ເປັນປະເທດບ້ານໃກ້ເຮືອນຄຽງທີ່ສະໜິດສະໜົມ, ມີສາຍພົວພັນມິດຕະພາບ, ຄວາມສາມັກຄີ ທີ່ເປັນມູນເຊື້ອອັນດີງາມຕັ້ງແຕ່ບູຮານນະການ ໂດຍໄດ້ຮັບການຖະໜຸຖະໜອມ ແລະ ເພີ່ມພູນຄູນສ້າງຈົນເຖິງເທົ່າທຸກວັນນີ້. ສອງປະເທດມີເສັ້ນຊາຍແດນຮ່ວມຍາວກວ່າ 2.000 ກມ, ການພົວພັນຢ່າງສະໜິດແໜ້ນ ລະຫວ່າງ ລາວ-ຫວຽດນາມ ໄດ້ຮັບການສ້າງຕັ້ງຂຶ້ນນັບແຕ່ໄລຍະປະຫວັດສາດແຫ່ງການສ້າງສາ ແລະ ປົກປັກຮັກສາປະເທດຊາດຂອງສອງປະເທດ.

ໂດຍຕອບສະໜອງຕາມຄຳເຊີນຂອງສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກປະຊາຊົນ ປະຕິບັດລາວ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ, ສະຫາຍ ເວືອງ ດິ່ງ ເຫວະ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ ປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະ ຈະເດີນທາງມາຢ້ຽມຢາມສັນຖະວະໄມຕີ ສປປລາວ ຢ່າງເປັນທາງການ

ອ່ານຕໍ່ໜ້າ 2

## ສພຊ ເປີດເຝິກອົບຮົມພາສາຫວຽດນາມ ໃຫ້ພະນັກງານ- ລັດຖະກອນ ຊຸດທີ I



(ສພຊ) ວັນທີ 12 ພຶດສະພາ 2022, ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີເປີດຊຸດເຝິກອົບຮົມພາສາຫວຽດນາມ ໃຫ້ພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ ໄລຍະ 3 ເດືອນ, 6 ເດືອນ ແລະ 1 ປີ ຊຸດທີ I ໂດຍການເປັນປະທານເປີດກອງປະຊຸມຮ່ວມຂອງສະຫາຍ ນາງ ປິ່ງຄຳ ລາຊະສົມມາ ເລຂາທິການສະພາແຫ່ງຊາດ ແລະ ສະຫາຍ ຫງວຽນ ບາ ຮຸ່ງ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ.ຫວຽດນາມ ປະຈຳ ສປປລາວ, ເຂົ້າຮ່ວມມີບັນດາສະຫາຍຫົວໜ້າກົມ, ສູນ, ຄະນະຄູ-ອາຈານ, ພະນັກງານຈາກສະຖານທູດຫວຽດນາມ ແລະ ບັນດານັກສຳມະນາກອນ ຈຳນວນ 28 ສະຫາຍ.

ທັງນີ້, ເພື່ອຈັດຕັ້ງຜັນຂະ

ອ່ານຕໍ່ໜ້າ 2



ໜ້າ 4

ທະນາຄານພັດທະນາລາວ
LDB Bank

ໜ້າ 7



ໜ້າ 4



ໜ້າ 5



ໜ້າ 5



ໜ້າ 5

## ກອງປະຊຸມ...

(ສພຊ) ເພື່ອຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; ໃນລະຫວ່າງວັນທີ 11-12 ພຶດສະພາ 2022 ທີ່ສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ສະໄໝວິສາມັນ ປະຈຳເດືອນພຶດສະພາ 2022 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.



ໃນກອງປະຊຸມ, ໄດ້ຮັບຟັງການລາຍງານຜົນການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍທີ່ຈະເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຈຳນວນ 4 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍວິຈິດສິນ, ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ ແລະ ກົດໝາຍວ່າດ້ວຍຄຳຮ້ອງທຸກ; ການກະກຽມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX, ການກະກຽມກອງປະຊຸມສຳມະນາຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX; ການຄົ້ນຄວ້າຫົວຂໍ້ທີ່ຈະນຳເຂົ້າຄົ້ນຄວ້າຢູ່ກອງປະຊຸມສຳມະນາຍົກສູງຄຸນນະພາບດ້ານເນື້ອໃນ ໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX; ການກະກຽມການຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງ ສສ.ຫວຽດນາມ ນຳພາໂດຍສະຫາຍປະທານສະພາແຫ່ງຊາດ ສສ.ຫວຽດນາມ; ບົດລາຍງານຜົນຂອງການເຄື່ອນໄຫວຕິດຕາມກວດກາຢູ່ 3 ແຂວງພາກໃຕ້ ແລະ ຮັບຟັງການລາຍງານສະພາບຄວາມຫຍຸ້ງຍາກຂອງນ້ຳມັນເຊື້ອໄຟໃນປັດຈຸບັນ; ຈາກນັ້ນ, ບັນດາທ່ານຄະນະປະຈຳສະພາແຫ່ງຊາດໄດ້ສຸມໃສ່ຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມໃສ່ບັນດາບົດລາຍງານຕ່າງໆ ທີ່ນຳມາລາຍງານໃນກອງປະຊຸມໃນຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາທີ່ມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

(ສົມນຶກ ແກ້ວໄຊຍະຈັກ)

# ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ທອມສະນິດ**

*q ລັດຖະບານ ໄດ້ກຳນົດມາດຕະການເຂົ້າ-ອອກ ສປປລາວ ແລະ ມາດຕະການຜ່ອນຜັນພາຍໃນປະເທດໃນໄລຍະມີການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງອະນຸຍາດໃຫ້ເປີດດ່ານສາກົນທຸກດ່ານ ສຳລັບການເຂົ້າ-ອອກຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ; ນອກຈາກນີ້, ຍັງໄດ້ມີມາດຕະການຜ່ອນຜັນພາຍໃນປະເທດ ໂດຍເຫັນດີໃຫ້ເປີດຮ້ານບັນເທີງ ແລະ ຄາລາໂອເກະ ແຕ່ອົງການຈັດຕັ້ງກ່ຽວຂ້ອງຕ້ອງໄດ້ຕິດຕາມໃຫ້ມີການປະຕິບັດມາດຕະການປ້ອງກັນພະຍາດໂຄວິດ-19 ຢ່າງເຂັ້ມງວດ.*

***ນສພ. ວຽງຈັນໃໝ່ 10/05/2022***

*q ຈາກການລາຍງານການກວດວິເຄາະໃນທົ່ວປະເທດດ້ວຍວິທີມາດຕະຖານ RT-PCR ໃນໄລຍະຫລັງມານີ້ ຕົວເລກຜູ້ຕິດເຊື້ອໃໝ່ໃນແຕ່ລະວັນມີທ່າອ່ຽງຫລຸດລົງຢ່າງຕໍ່ເນື່ອງ ເຊິ່ງສະທ້ອນໃຫ້ເຫັນວ່າອາດເປັນໄປໄດ້ວ່າປັດຈຸບັນມີປະຊາຊົນຈຳນວນຫລາຍໄດ້ຊື້ຊຸດເຄື່ອງກວດແບບໄວມາກວດດ້ວຍຕົນເອງ; ສະນັ້ນ, ເພື່ອປະເມີນສະພາບການລະບາດທີ່ແທ້ຈິງພາຍໃນປະເທດ; ກະຊວງສາທາລະນະສຸກ ຮຽກຮ້ອງມາຍັງທ່ານ ຖ້າຫາກຜົນກວດຂອງຕົນເອງຂຶ້ນ 2 ຂີດ ຂໍໃຫ້ທ່ານລົງທະບຽນຜົນກວດເປັນບວກດ້ວຍຕົນເອງ (ລາຍລະອຽດທ່ານສາມາດຕິດຕາມຂັ້ນຕອນການລົງທະບຽນໄດ້ທີ່ເຟດບຸກຂອງສູນຂ່າວສານການແພດ ແລະ ສຸຂະສຶກສາ, ກະຊວງສາທາລະນະສຸກ).*

***ນສພ. ປະເທດລາວ 10/05/2022***

## ສພຊ...



ຫຍາຍບົດບັນທຶກ ວ່າດ້ວຍການຮ່ວມມືລະຫວ່າງຄະນະເລຂາທິການສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສອງຫ້ອງວ່າການສະພາແຫ່ງຊາດແຫ່ງ ສສ.ຫວຽດນາມ ກໍຄືຜົນຂອງການຢ້ຽມຢາມສັນຖາວະໄມຕີ ສສ.ຫວຽດນາມ ຢ່າງເປັນທາງການຂອງຄະນະຜູ້ແທນຂັ້ນສູງ ນຳໂດຍສະຫາຍປະທານສະພາແຫ່ງຊາດລາວ ໃນລະຫວ່າງວັນທີ 6-8 ທັນວາ 2021 ແລະ ເພື່ອຍົກລະດັບຄວາມຮູ້, ຄວາມສາມດທາງດ້ານພາສາຕ່າງປະເທດ ໃຫ້ແກ່ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ ແລະ ເພື່ອປະກອບສ່ວນເຂົ້າໃນການຈັດກິດຈະກຳສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2022 ກໍຄືວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ຄົບຮອບ 45 ປີ ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ແຜນການຈັດກິດຈະກຳເພື່ອສະເຫລີມສະຫລອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022 ເຊິ່ງການຈັດເຝິກອົບຮົມຄັ້ງນີ້ ກໍຢູ່ໃນຂະບວນການຈັດກອງປະຊຸມສຳມະນາ, ແລກປ່ຽນບົດຮຽນ ລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ; ສຳລັບຫລັກສູດການຮຽນ ແມ່ນຈະຮຽນໃນລະດັບເລີ່ມຕົ້ນ ເລີ່ມຈາກການຮຽນຂັ້ນພື້ນຖານຂຶ້ນໄປ, ສ່ວນລະດັບກາງ-ສູງ ແມ່ນຜູ້ທີ່ສາມາດເວົ້າ, ຂຽນ, ອ່ານ ແລະ ຟັງໄດ້ ຢູ່ໃນລະດັບກາງຂຶ້ນໄປ.

ໂອກາດນີ້, ສະຫາຍ ຫງວຽນ ບາ ຮຸ່ງ ໄດ້ກ່າວວ່າ: ການພົວພັນລະຫວ່າງຫວຽດນາມ-ລາວ ແມ່ນສາຍພົວພັນມິດຕະພາບອັນດີງາມທີ່ການນຳຂອງພັກ, ລັດ ແລະ ປະຊາຊົນສອງປະເທດ ໄດ້ຮັບການກໍ່ສ້າງຢ່າງຕັ້ງໜ້າໃນໄລຍະຜ່ານມາ ເຊິ່ງໃນປະຫວັດສາດໄດ້ພິສູດໃຫ້ເຫັນວ່າ ນ້ຳໃຈສາມັກຄີ ມິດຕະພາບ ທີ່ເປັນ ມູນເຊື້ອຂອງສອງປະເທດເຮົາ ແມ່ນຄວາມເຂົ້າໃຈ ແລະ ການແບ່ງປັນນັບແຕ່ການປະຕິວັດຍັງບໍ່ທັນປະສົບຜົນສຳເລັດ ສອງປະເທດໄດ້ຢືນຄຽງຂ້າງຕໍ່ສູ້ປົດປ່ອຍປະເທດຊາດ ນຳຄວາມຜາສຸກ ແລະ ຊີວິດທີ່ຈະເລີນຮຸ່ງເຮືອງຄືມື້ນີ້; ສຳລັບການເຝິກອົບຮົມໃນຄັ້ງນີ້ ສະຖານທູດ ຈະໄດ້ມີການປະສານສົມທົບຢ່າງແໜ້ນແຟ້ນກັບການນຳຂອງສະພາແຫ່ງຊາດລາວ ຢ່າງສະໝ່ຳສະເໝີ ແລະ ເປັນປົກກະຕິ ເພື່ອຮັບປະກັນຊຸດເຝິກອົບຮົມພາສາຫວຽດນາມ; ສະຫາຍຍັງໄດ້ກ່າວຕື່ມອີກວ່າ: ການຮຽນພາສາຕ່າງປະເທດແມ່ນຈະຕ້ອງໄດ້ລົງທຶນທາງດ້ານເວລາ ຫວັງຢ່າງຍິ່ງວ່າບັນດາສະຫາຍນັກເຝິກອົບຮົມ ຈະຊັບຊ້ອນເວລາໃນການເຂົ້າຮ່ວມເຝິກອົບຮົມຢ່າງເປັນປົກກະຕິ ເພື່ອເຮັດໃຫ້ຊຸດເຝິກອົບຮົມຄັ້ງນີ້ ມີປະສິດທິຜົນ ແລະ ປະສົບຜົນສຳເລັດຢ່າງຈົບງາມ.

ໃນພິທີ, ສະຫາຍ ນາງ ປິ່ງຄຳ ລາຊະສິມມາ ໄດ້ກ່າວວ່າ: ການເປີດຊຸດເຝິກອົບຮົມພາສາຫວຽດນາມ ໃຫ້ແກ່ພະນັກງານ-ລັດຖະກອນ ສພຊ ໃນຄັ້ງນີ້ ສຸດທີ່ມີຄວາມໝາຍ ແລະ ຄວາມສຳຄັນຍິ່ງ ເຊິ່ງເປັນການເປີດຂຶ້ນໃນທ່າມກາງການສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2022 ກໍຄືວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ຄົບຮອບ 45 ປີ ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ແຜນການຈັດກິດຈະກຳເພື່ອສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2022; ທັງເປັນການສ້າງກິດຈະກຳເພື່ອກະກຽມຮັບຕ້ອນການມາຢ້ຽມຢາມ ສປປລາວ ຢ່າງເປັນທາງການ ຂອງຄະນະຜູ້ແທນຂັ້ນສູງ ນຳໂດຍສະຫາຍ ເວືອງ ດິງ ເຫວະ ກຳມະການກົມການເມືອງສູນກາງພັກຄອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ໃນລະຫວ່າງວັນທີ 15-17 ພຶດສະພາ 2022 ນີ້ ທັງເປັນການປະກອບສ່ວນຮັດແໜ້ນສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ກ້າວເຂົ້າສູ່ລວງເລິກ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ; ການເຝິກອົບຮົມໃນຄັ້ງນີ້ ແມ່ນຂະບວນການເຝິກຝົນຫລໍ່ຫລອມ, ການກໍ່ສ້າງພະນັກງານ-ລັດຖະກອນ ໃຫ້ໄດ້ຮຽນຮູ້ ແລະ ນຳເອົາຄວາມຮູ້ພື້ນຖານທາງດ້ານພາສາຫວຽດນາມ ເພື່ອໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ການເມືອງ, ວຽກງານຕົວຈິງທີ່ຕົນຮັບຜິດຊອບໃຫ້ເກີດຜົນປະໂຫຍດສູງສຸດ; ບັນດານັກເຝິກອົບຮົມທີ່ມີລາຍຊື່ ຈະຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າ, ຮ່ຳຮຽນເຝິກຝົນຫລໍ່ຫລອມຕົນເອງ ຕາມທິດຖືເອົາການຍົກສູງຄຸນນະພາບ ແລະ ຄວາມຮູ້, ຄວາມສາມາດເປັນກົກ, ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ຕ່າງໆ ແລະ ບັນດານັກເຝິກອົບຮົມ ຈະຕ້ອງຍາດແຍ່ງເອົາບົດຮຽນ ທີ່ທາງຄູ-ອາຈານນຳມາສິດສອນ ເພື່ອນຳມາຈັດຕັ້ງຜັນຂະຫຍາຍເຂົ້າໃນໜ້າທີ່ວຽກງານ ໃຫ້ເກີດດອກອອກຜົນໃນຕໍ່ໜ້າ; ພ້ອມນັ້ນ, ສະຫາຍຍັງໄດ້ຮຽກຮ້ອງມາຍັງບັນດາສະຫາຍນັກເຝິກອົບຮົມ ກໍຄືພະນັກງານ-ລັດຖະກອນ ຂອງສະພາແຫ່ງຊາດ ທີ່ໄດ້ຖືກມອບໝາຍເຂົ້າຮ່ວມຊຸດເຝິກອົບຮົມໃນຄັ້ງນີ້ ຈົ່ງໄດ້ເຊີດຊູຄວາມຮັບຜິດຊອບຂອງຕົນ ຕັ້ງໜ້າຮ່ຳຮຽນ ແລະ ຍົກລະດັບພາສາຫວຽດນາມຂອງຕົນ ເພື່ອສາມາດນຳໃຊ້ໄດ້ໃນການປະຕິບັດໜ້າທີ່ວຽກງານຂອງຕົນ.

(ນາງ ສຸພາວັນ ທອມສະນິດ)

## ເຫດການ...

ໃນລະຫວ່າງວັນທີ 15-17 ພຶດສະພານີ້.

ນີ້ແມ່ນເຫດການສຳຄັນໃນປະຫວັດສາດແຫ່ງການພົວພັນທີ່ເປັນມູນເຊື້ອຂອງສອງປະເທດ ໃນທ່າມກາງທີ່ສອງປະເທດພວມກະກຽມສະເຫລີມສະຫລອງ 60 ປີ ວັນສ້າງຕັ້ງສາຍພົວພັນການທູດ (5/9/1962-5/9/2022) ແລະ 45 ປີ ວັນເຊັນສົນທິສັນຍາມິດຕະພາບ ແລະ ຮ່ວມມື ຄົບຮອບ 45 ປີ (18/7/1977-18/7/2022), ຂ່ຳນັບຮັບຕ້ອນປີສາມັກຄີມິດຕະພາບ ລາວ-ຫວຽດນາມ, ຫວຽດນາມ-ລາວ 2022. ການຢ້ຽມຢາມລາວ ຂອງຄະນະຜູ້ແທນຂັ້ນສູງຫວຽດນາມຄັ້ງນີ້ ເພື່ອໃຫ້ 2 ປະເທດພ້ອມກັນສືບທອດ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງປະເທດ ລາວ-ຫວຽດນາມ ໃຫ້ນັບມື້ເຂົ້າສູ່ລວງເລິກ.

ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ສືບຕໍ່ໄດ້ຮັບການປັບປຸງຂຶ້ນຢ່າງແໜ້ນແຟ້ນ, ນັບມື້ເຂົ້າສູ່ລວງເລິກໃນທຸກຂົງເຂດວຽກງານການຮ່ວມມື. ຄວາມໃກ້ຊິດຕິດແທດ, ຄວາມເຊື່ອໝັ້ນດ້ານການເມືອງນັບມື້ເພີ່ມຂຶ້ນ. ເຖິງວ່າໃນສະພາບທີ່ມີການລະບາດໜັກຂອງພະຍາດໂຄວິດ-19, ແຕ່ການນຳຂອງສອງປະເທດ ຍັງໄດ້ມີການແລກປ່ຽນຄະນະຜູ້ແທນຂັ້ນສູງນຳກັນດ້ວຍຫລາຍຮູບການ, ແບບເປັນປົກກະຕິ, ແບບທາງໄກ ນັບແຕ່ສູນກາງລົງຮອດທ້ອງຖິ່ນ. ອັນພົ້ນເດັ່ນແມ່ນການຢ້ຽມຢາມມິດຕະພາບ ສສ.ຫວຽດນາມ ຢ່າງເປັນທາງການຂອງສະຫາຍ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ ແລະ ສະຫາຍ ນາງ ປານີ ຢາທໍ່ຕູ້ ຮອງປະທານປະເທດ ແຫ່ງ ສປປລາວ.

ສອງປະເທດ ໄດ້ປະຕິບັດກົນໄກການຮ່ວມມືໃນທຸກຂົງເຂດວຽກງານ ໂດຍສະເພາະການຮ່ວມມືດ້ານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ປະສານສົມທົບໃນການປົກປັກຮັກສາເສັ້ນຊາຍແດນສັນຕິພາບ, ມິດຕະພາບ, ຮ່ວມມືດ້ານເສດຖະກິດ, ວັດທະນະທຳ, ການສຶກສາ ແລະ ວິທະຍາສາດ-ເຕັກນິກ ໄດ້ມີການພັດທະນາຂຶ້ນໄປເລື້ອຍໆ. ປີ 2021 ວົງເງິນການຄ້າສອງສົ້ນບັນລຸ 1,37 ຕື້ໂດລາ, ເພີ່ມຂຶ້ນ 33,3% ເມື່ອທຽບໃສ່ປີ 2020, ລື່ນກາຍຄາດໝາຍ ເຊິ່ງການນຳຂັ້ນສູງສອງປະເທດວາງອອກໃຫ້ຂະແໜງອຸດສາຫະກຳ-ການຄ້າສອງປະເທດ (10%). ໃນນັ້ນ, ວົງເງິນນຳເຂົ້າສິນຄ້າຂອງຫວຽດນາມຈາກລາວ ບັນລຸເກືອບ 780 ລ້ານໂດລາ, ເພີ່ມຂຶ້ນ 70% ເມື່ອທຽບໃສ່ປີ 2020.

ອວຍພອນໃຫ້ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ, ຫວຽດນາມ-ລາວ ຈົ່ງໝັ້ນຄົງຂະໜົງແກ່ນຕະຫລອດການະນານ.

ໂດຍ: ສີວັນ

## ປະທານ...

ຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຄະນະກຳມະການຄະນະເລຂາທິການສະພາປະຊາຊົນແຂວງ, ເຈົ້າເມືອງ 8 ເມືອງ, ພະແນກການ ແລະ ອົງການອ້ອມຂ້າງແຂວງ.

ໃນໂອກາດນີ້, ທ່ານ ສີເຮັງ ທອມສົມບັດ ໄດ້ລາຍງານວຽກງານຂອງສະພາປະຊາຊົນແຂວງ ແລະ ການພັດທະນາເສດຖະກິດ-ສັງຄົມຂອງແຂວງ, ການປະຕິບັດ 2 ວາລະແຫ່ງຊາດ ໂດຍສັງເຂບ; ຈາກນັ້ນ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ກ່າວສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ແຂວງຍາດມາໄດ້ໃນໄລຍະຜ່ານມາ ທັງໝົດນັ້ນແມ່ນຍ້ອນຄວາມເອົາໃຈໃສ່ຂອງການນຳແຂວງ ກໍຄືອຳນາດການປົກຄອງແຕ່ລະຂັ້ນໄດ້ຊີ້ນຳ-ນຳພາ; ເພື່ອເປັນທິດໃນການຊີ້ນຳ-ນຳພາວຽກງານ ທ່ານຍັງໄດ້ເນັ້ນໃຫ້ການນຳ, ພະນັກງານຫລັກແຫລ່ງທຸກຂັ້ນຈົ່ງພ້ອມກັນສຸມທຸກວິທີເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາ-ເສດຖະກິດສັງຄົມຂອງແຂວງໃຫ້ບັນລຸຕາມແຜນການທີ່ວາງໄວ້ ແລະ 2 ວາລະແຫ່ງຊາດ ເຊັ່ນ: ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ເຊິ່ງທ່ານໄດ້ເນັ້ນໃຫ້ຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງເພີ່ມທະວີຄວາມເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານຢ່າງທົ່ວເຖິງ ແລະ ເລິກເຊິ່ງ; ສ້າງ ແລະ ປັບປຸງຕາໜ່າງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ທ້ອງຖິ່ນຮາກຖານ ໃຫ້ເຂັ້ມແຂງ, ໜັກແໜ້ນ; ສະກັດກັ້ນອາດສະຍາກຳຕ່າງໆຢ່າງທັນການ, ເດັດຂາດ ແລະ ເຂັ້ມງວດ; ເອົາໃຈໃສ່ການຄຸ້ມຄອງສຳມະໂນຄົວ, ການຄຸ້ມຄອງຄົນຕ່າງປະເທດ ໃຫ້ເຂັ້ມງວດຕາມກົດໝາຍ; ເພີ່ມທະວີການນຳພາຊີ້ນຳຂະແໜງການທີ່ກ່ຽວຂ້ອງຂອງແຂວງ ນຳໃຊ້ທ່າແຮງບົ່ມຊ້ອນຂອງແຂວງ ເພື່ອສຸມທຶນຮອນ, ເຕັກນິກວິຊາການ ເຂົ້າໃສ່ການຜະລິດເປັນສິນຄ້າຂອງປະຊາຊົນ ເປັນຕົ້ນ: ການປູກເຂົ້າ, ກາເຟ, ໄມ້ໃຫ້ໝາກ, ການປູກໄມ້ອຸດສາຫະກຳ, ການປູກຜັກປອດສານພິດ, ການລ້ຽງສັດໃຫຍ່ເປັນສິນຄ້າ ເພື່ອສ້າງອາຊີບ ແລະ ລາຍຮັບອັນໝັ້ນຄົງໃຫ້ປະຊາຊົນ; ເພີ່ມທະວີຄວາມເອົາໃຈໃສ່ໃນການນຳພາ-ຊີ້ນຳຂະແໜງການທີ່ກ່ຽວຂ້ອງໃນການສ້າງແຫລ່ງທ່ອງທ່ຽວຂອງແຂວງ ຕິດພັນກັບການອະນຸລັກທຳມະຊາດ ໂດຍສະເພາະແຫລ່ງທ່ອງທ່ຽວທີ່ມີແລ້ວ; ຕິດຕາມ, ຊຸກຍູ້ໂຄງການລົງທຶນຂອງແຂວງ ຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດໂຄງການດັ່ງກ່າວໄດ້ປະກອບສ່ວນເຂົ້າໃນການພັດທະນາທ້ອງຖິ່ນໃຫ້ມີການຫັນປ່ຽນໃໝ່ຢ່າງຕັ້ງໜ້າ; ເພີ່ມທະວີການນຳພາ-ຊີ້ນຳ ວຽກງານການພັດທະນາຊັບພະຍາກອນມະນຸດໃຫ້ໄປຕາມແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງທີ່ວາງອອກ ທັງແກ້ໄຂໃຫ້ໄດ້ການສ້າງວຽກເຮັດງານທຳໃຫ້ແກ່ນັກສຶກສາທີ່ຮຽນຈົບ, ແກ້ໄຂບັນຫາການໄປອອກແຮງງານຢູ່ປະເທດໃກ້ຄຽງ; ພ້ອມກັນນັ້ນ, ກໍໃຫ້ເອົາໃຈໃສ່ການສຶກສາອົບຮົມແລະຮຽນຮູ້ມູນເຊື້ອຄວາມສາມັກຄີປອງດອງ, ນ້ຳໃຈຮັກຊາດ ແລະ ເສຍສະຫລະ ເພື່ອຜົນປະໂຫຍດສ່ວນລວມ ສ້າງສະຕິເຄົາລົບກົດໝາຍ ແລະ ການປະຕິບັດພັນທະຂອງປະຊາຊົນ.

ຈາກນັ້ນ, ກໍໄດ້ຊີ້ນຳຕໍ່ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ແລະ ວຽກງານການຕ່າງປະເທດ ຕື່ມອີກ.

(ຂ່າວ: ນາງ ຄັດສອນ ຮຸ່ງສະຫວ່າງ; ພາບ: ດີລຳພົນ ພົມມະຈັນ)

## ປະທານ ສພຊ...

ພົວພັນພິເສດນີ້ ຕະຫລອດໄລຍະຜ່ານມາ ແລະ ໃນໄລຍະພາຍຫລັງການສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2017 ຮອດປັດຈຸບັນ, ສອງຝ່າຍຍັງສືບຕໍ່ຮັດແໜ້ນເສີມຂະຫຍາຍສາຍພົວພັນດັ່ງກ່າວ ໂດຍໄດ້ມີການຜັນຂະຫຍາຍບັນດາຂໍ້ກຳນົດໃນບົດບັນທຶກການຮ່ວມມືນຳກັນ ລະຫວ່າງປະທານສະພາແຫ່ງຊາດຂອງສອງປະເທດ ກໍຄືລະຫວ່າງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຂອງສອງປະເທດກໍເຊັ່ນກັນ, ໄລຍະຜ່ານມາມີກົນໄກໃນການປະສານສົມທົບເຊິ່ງກັນແລະກັນ ຢ່າງໃກ້ຊິດ, ມີການແລກປ່ຽນຢ້ຽມຢາມຂອງການນຳຂັ້ນສູງ, ແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນຕ່າງໆ ຂອງສອງອົງການນິຕິບັນຍັດ; ນອກຈາກນີ້, ສອງຝ່າຍຍັງໄດ້ມີການປະສານສົມທົບຢ່າງແໜ້ນແຟ້ນ, ສະໜັບສະໜູນ ແລະ ຊ່ວຍເຫລືອເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນການເປັນເຈົ້າພາບ ແລະ ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA), ກອງປະຊຸມ 3 ກຳມາທິການຕ່າງປະເທດ ຂອງສະພາແຫ່ງຊາດກຳປູເຈຍ, ລາວ ແລະ ຫວຽດນາມ (CLV), ກອງປະຊຸມສະມັດຊາໃຫຍ່ຂອງສະຫະພັນລັດຖະສະພາສາກົນ (IPU), ກອງປະຊຸມສະມັດຊາລັດຖະພາທີ່ໃຊ້ພາສາຝຣັ່ງ (APF), ກອງປະຊຸມຄູ່ຮ່ວມລັດຖະສະພາອາຊີ-ເອີຣົບ (ASEP) ແລະ ການເຄື່ອນໄຫວໃນເວທີລັດຖະສະພາອື່ນໆ.

ອັນພົ້ນເດັ່ນ, ສະພາແຫ່ງຊາດໄດ້ມີການຊຸກຍູ້ສະໜັບສະໜູນ ແລະ ຊຸກຍູ້ໃຫ້ສອງລັດຖະບານໃນການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງ ທີ່ສອງຝ່າຍໄດ້ລົງນາມຮ່ວມກັນ ຢ່າງມີປະສິທິຜົນສູງ, ໂດຍຜ່ານການຈັດຕັ້ງຄະນະລົງຕິດຕາມກວດກາບັນດາໂຄງການຮ່ວມມືຂອງສອງປະເທດ ເຊິ່ງເປັນການຍົກສູງບົດບາດການຕິດຕາມກວດຂອງອົງການນິຕິບັນຍັດຂອງສອງປະເທດ, ສອງຝ່າຍຍັງໄດ້ຈັດສຳມະນາ, ເຝິກອົບຮົມຮ່ວມກັນໃນຫລາຍຫົວຂໍ້ວິທະຍາສາດສຳຄັນທີ່ຕິດພັນກັບບົດບາດຂອງສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ນະຄອນຫລວງ ແລະ ພະນັກງານ ທີ່ເປັນເສນາທິການຂອງສະພາແຫ່ງຊາດ; ພ້ອມນັ້ນ, ສະຫາຍຍັງໄດ້ຕີລາຄາສູງຕໍ່ການຈັດຕັ້ງການສຳມະນາ, ເຝິກອົບຮົມ ຜ່ານມາເຫັນວ່າເປັນບົດຮຽນມີຄຸນນະພາບຫລາຍ ໂດຍສະເພາະຕໍ່ສະມາຊິກສະພາແຫ່ງຊາດອາຊີບ ແລະ ສະມາຊິກສະພາແຫ່ງຊາດໃໝ່ ແລະ ພະນັກງານເສນາທິການຂອງສະພາແຫ່ງຊາດ ມາໝູນໃຊ້ຕົວຈິງດ້ວຍຄຸນນະພາບ ເຂົ້າໃນການປະຕິບັດໜ້າທີ່ຂອງຕົນ. ນອກຈາກນີ້, ສອງສະພາແຫ່ງຊາດຍັງໄດ້ເປັນເຈົ້າການໃນການຈັດຕັ້ງດຳເນີນ ແລະ ຕິດຕາມກວດກາໂຄງການກໍ່ສ້າງຫໍສະພາແຫ່ງຊາດລາວຫລັງໃໝ່ ເຊິ່ງແມ່ນຂອງຂວັນອັນປະເສີດຂອງພັກ, ລັດ ແລະ ປະຊາຊົນຫວຽດນາມ ມອບໃຫ້ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ໂດຍໂຄງການດັ່ງກ່າວໄດ້ສຳເລັດຕາມຄາດໝາຍ ແລະ ເວລາທີ່ກຳນົດໄວ້ ດ້ວຍຜົນສຳເລັດອັນຈົບງາມ ແລະ ມີຄຸນນະພາບສູງ ເຊິ່ງກາຍເປັນສັນຍາລັກແຫ່ງສາຍພົວພັນພິເສດທີ່ຫາຍາກ ລະຫວ່າງ ລາວ-ຫວຽດນາມ;

ເພື່ອສະເຫລີມສະຫລອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022 ໃຫ້ບັນລຸຕາມລະດັບຄາດໝາຍ ສະພາແຫ່ງຊາດ ລາວ-ຫວຽດນາມ ໄດ້ປຶກສາຫາລືຮ່ວມກັນເຊິ່ງການສ້າງກິດຈະກຳສະເຫລີມສະຫລອງ ດັ່ງນີ້:

1. ເຊື້ອເຊີນຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ນຳໂດຍປະທານສະພາແຫ່ງຊາດຫວຽດນາມ ມາຢ້ຽມຢາມສັນຖະວະໄມຕີ ຢູ່ ສປປລາວ ຢ່າງເປັນທາງການໃນມໍ່ໆນີ້ ເຊິ່ງຈະມີການເຊັນບົດບັນທຶກການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ແລະ ບົດບັນທຶກການຮ່ວມມືລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວແລະຫ້ອງວ່າການສະພາແຫ່ງຊາດຫວຽດນາມ, ຈັດຕັ້ງກອງປະຊຸມສຳມະນາແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ ແລະ ຫົວຂໍ້ທີ່ສອງຝ່າຍມີຄວາມສົນໃຈ ຈຳນວນໜຶ່ງ.

2. ຈັດກອງປະຊຸມສຳມະນາ ແລະ ແລກປ່ຽນບົດຮຽນ ລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ຈະໄດ້ຈັດຂຶ້ນໃນເດືອນກໍລະກົດ ປີ 2022 ທີ່ ສສ.ຫວຽດນາມ ເຊິ່ງຈະເປັນໂອກາດດີໃຫ້ພະນັກງານເສນາທິການຂອງສະພາແຫ່ງຊາດຂອງສອງປະເທດ ໄດ້ແລກປ່ຽນຖອດຖອນບົດຮຽນຮ່ວມກັນທັງເປັນການສຶກສາອົບຮົມໃຫ້ພະນັກງານຮຸ່ນໜຸ່ມ ຂອງສອງສະພາແຫ່ງຊາດ ໄດ້ຖອດຖອນບົດຮຽນ ແລະ ເຂົ້າໃຈເລິກເຊິ່ງກວ່າເກົ່າກ່ຽວກັບມູນເຊື້ອແຫ່ງສາຍພົວພັນອັນພິເສດ ລະຫວ່າງລາວ-ຫວຽດນາມ, ຫວຽດນາມ-ລາວ ທີ່ມີໜຶ່ງດຽວໃນໂລກນີ້ໃຫ້ສືບທອດຮຸ່ນຕໍ່ຮຸ່ນ ຕະຫລອດການະນານ.

3. ຈັດກອງປະຊຸມສຳມະນາແລກປ່ຽນບົດຮຽນ ກ່ຽວກັບການປະຕິບັດພາລະບົດບາດ ຂອງບັນດາສະມາຊິກສະພາແຫ່ງຊາດເພດຍິງ ແລະ ບັນດາສະມາຊິກສະພາໜຸ່ມ ຄາດຄະເນຈັດຂຶ້ນໃນເດືອນສິງຫາ ຫລື ກັນຍາ 2022 ທີ່ ສສ.ຫວຽດນາມ.

4. ສອງສະພາແຫ່ງຊາດຮ່ວມກັນຕິດຕາມກວດກາການຈັດຕັ້ງປະຕິບັດບັນດາໂຄງການຊ່ວຍເຫລືອລ້າ ຂະໜາດໃຫຍ່ ແລະ ໂຄງການລົງທຶນຂອງສອງປະເທດ ເພື່ອເຮັດໃຫ້ໂຄງການມີຄວາມຄືບໜ້າ ແລະ ສຳເລັດຕາມວັນເວລາທີ່ກຳນົດໄວ້.

ນອກຈາກນີ້, ສະພາແຫ່ງຊາດລາວ ຍັງຈະໄດ້ປະກອບສ່ວນສ້າງກິດຈະກຳຮ່ວມກັບພັກ ແລະ ລັດຖະບານ ເພື່ອສະເຫລີມສະຫລອງວັນປະຫວັດສາດດັ່ງກ່າວຕື່ມອີກ ເປັນຕົ້ນແມ່ນການວາງສະແດງຮູບພາບການພົວພັນ ແລະ ການຮ່ວມມື ລະຫວ່າງສອງສະພາແຫ່ງຊາດລາວ ແລະ ຫວຽດນາມ; ການແລກປ່ຽນສິລະປະວັດທະນະທຳ; ການເລົ່າມູນເຊື້ອກ່ຽວກັບການຮ່ວມມື ແລະ ການຊ່ວຍເຫລືອຂອງທະຫານອາສາສະໝັກຫວຽດນາມ; ການຂຽນບົດຄວາມຮູ້ສຶກໃນວາລະສານສະບັບພິເສດ ຂອງຄະນະຮັບຜິດຊອບສະເຫລີມສະຫລອງວັນປະຫວັດສາດ ແລະ ການເຄື່ອນໄຫວອື່ນໆ;

ສະຫາຍຍັງໄດ້ກ່າວຕື່ມອີກວ່າ: ພວກຂ້າພະເຈົ້າ ຖືສຳຄັນໃນການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ໃນສະໄໝປັດຈຸບັນຂອງຕົນ ເພື່ອປະກອບສ່ວນສ້າງລັດທີ່ຄຸ້ມຄອງດ້ວຍກົດໝາຍ ໃຫ້ນັບມື້ນັບມີປະສິດທິຜົນ ແລະ ໃນແຜນການ 5 ປີຕໍ່ໜ້າ ສະພາແຫ່ງຊາດລາວ ຖືສຳຄັນການສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືກັບສະພາແຫ່ງຊາດຫວຽດນາມ ເພື່ອແລກປ່ຽນຖອດຖອນບົດຮຽນໃນການຄຸ້ມຄອງລັດດ້ວຍກົດໝາຍ, ການປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ; ພ້ອມນັ້ນ, ຍັງຈະໄດ້ມີການຮ່ວມມື, ປະສານງານກັນໃນການເສີມຂະຫຍາຍສາຍພົວພັນພິເສດທີ່ຫາຍາກ ລະຫວ່າງ ລາວ-ຫວຽດນາມ ໃຫ້ນັບມື້ນັບມີປະສິດທິຜົນ, ປະສານງານຢ່າງກົມກຽວໃນເວທີພາກພື້ນ ແລະ ສາກົນ ເພື່ອພ້ອມກັນປະກອບສ່ວນເຂົ້າໃນພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມມືກັບສະພາແຫ່ງຊາດຫວຽດນາມ ແລະ ຈະພ້ອມກັນກັບບັນດາສະຫາຍຫວຽດນາມ ເພື່ອຍົກສູງຄຸນນະພາບຂອງການຮ່ວມມືສອງຝ່າຍ.

ສະຫາຍຍັງໃຫ້ຮູ້ຕື່ມອີກວ່າ: ເຖິງແມ່ນວ່າສະພາບການພາກພື້ນ ແລະ ສາກົນ ຍັງສືບຕໍ່ຜັນແປຢ່າງໄວວາ, ສະຫລັບຊັບຊ້ອນ ແລະ ຄາດເດົາໄດ້ຍາກ, ສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ເປັນວົງກວ້າງຢູ່ໃນພາກພື້ນ ແລະ ທົ່ວໂລກ ເຊິ່ງໄດ້ສົ່ງຜົນກະທົບຢ່າງໜັກໜ່ວງຕໍ່ສອງປະເທດຂອງພວກເຮົາ, ສອງປະເທດກໍຍັງມີຄວາມຫຍຸ້ງຍາກບໍ່ໜ້ອຍ, ແຕ່ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ສືບຕໍ່ໄດ້ຮັບການເສີມຂະຫຍາຍຂຶ້ນຢ່າງບໍ່ຢຸດຢັ້ງ ແລະ ການທີ່ສອງປະເທດພວກເຮົາຈັດຕັ້ງປີສາມັກຄີມິດຕະພາບຍິ່ງເປັນການສະແດງໃຫ້ເຫັນຄວາມມີຊີວິດຊີວາແຫ່ງຄວາມສາມັກຄີພິເສດ ເຊິ່ງເປັນໂອກາດໃຫ້ພວກເຮົາໄດ້ທວນຄືນມູນເຊື້ອແຫ່ງສາຍພົວພັນທີ່ຫາຍາກ ໃນຕະຫລອດໄລຍະຫລາຍທົດສະວັດທີ່ຜ່ານມາ, ທັງເປັນໂອກາດສຶກສາອົບຮົມປະຊາຊົນສອງຊາດ, ພິເສດ ຄົນຮຸ່ນໜຸ່ມໃຫ້ຮູ້ ແລະ ເຂົ້າໃຈເຖິງຄວາມຈິງດັ່ງກ່າວ.

ໃນສະພາບທີ່ມີບັນດາອິດທິກຳລັງປໍລະປັກ ແລະ ພວກບໍ່ຫວັງດີພວມຊອກວິທີເພື່ອທຳລາຍ, ໃສ່ຮ້າຍປ້າຍສີ ສາຍພົວພັນພິເສດ ລາວ-ຫວຽດນາມ, ຍິ່ງກວ່າຍາມໃດໝົດທີ່ສອງພັກ, ລັດ ແລະ ປະຊາຊົນສອງຊາດ ຕ້ອງໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ສຶກສາອົບຮົມຄົນຮຸ່ນໜຸ່ມຂອງສອງປະເທດ ໃຫ້ຮູ້, ເຂົ້າໃຈກ່ຽວກັບທາດແທ້ຂອງຄວາມສາມັກຄີພິເສດລາວ-ຫວຽດນາມ ທີ່ການນຳຮຸ່ນຕ່າງໆ, ນັກປະຕິວັດຂອງສອງຊາດໄດ້ຖະນຸຖະໜອມມາດ້ວຍເລືອດເນື້ອ ນັ້ນ ເພື່ອໃຫ້ຄົນຮຸ່ນໜຸ່ມຖືເປັນຄວາມຮັບຜິດຊອບການເມືອງຂອງຕົນ ໃນການສືບຕໍ່ຮ່ວມກັນປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອແຫ່ງສາຍພົວພັນພິເສດນີ້ ໃຫ້ຍືນຍົງຕະຫລອດໄປ, ພ້ອມກັນຈັບມືກັນກ້າວຂຶ້ນຢ່າງໜັກແໜ້ນ.

ຂໍຖືໂອກາດນີ້ ຂໍອວຍພອນໃຫ້ການສະເຫລີມສະຫລອງວັນສຳຄັນຂອງສອງປະເທດ ປະສົບຜົນສຳເລັດຢ່າງຈົບງາມ.



# ພິທີວາງສີລາລຶກໂຄງການກໍ່ສ້າງ ພະພຸດທະຮູບ ພຸດທະປາລະມີ ສີລິຈອມແຈ້ງ



(ສພຊ) ພິທີວາງສີລາລຶກໂຄງການກໍ່ສ້າງພະພຸດທະຮູບ ພຸດທະປາລະມີ ສີລິຈອມແຈ້ງ ໄດ້ຈັດຂຶ້ນວັນທີ 9 ພຶດສະພາ 2022 ທີ່ຈຸດຊົມວິວຂອງເມືອງປາກແບງ ແຂວງອຸດົມໄຊ ໂດຍການເຂົ້າຮ່ວມຂອງທ່ານ ຄໍາດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ທ່ານ ຄໍາສະພອນ ໄຊຍະວົງ ເຈົ້າເມືອງປາກແບງ, ທ່ານ ນາງ ຄໍາຈັນ ພົມແສງສະຫວັນ ຮອງປະທານສູນກາງແນວລາວສ້າງຊາດ, ຫົວໜ້າຄະນະທີ່ປຶກສາສາສະໜາ, ພຣະອາຈານໃຫຍ່ມະຫາເວດ ມະເສໄນ ຮອງປະທານສູນກາງອົງການພຸດທະສາສະໜາສໍາພັນລາວ, ມີບັນດາການນໍາແຂວງ-ເມືອງ, ພະສົງ, ສາມະເນນ ຕະຫລອດຮອດເຈົ້າພາບ, ເຈົ້າສັດທາ, ປະຊາຊົນຊາວເມືອງປາກແບງ ແລະ ເມືອງອ້ອມຂ້າງເຂົ້າຮ່ວມ.

ໃນພິທີ, ທ່ານ ຄໍາສະພອນ ໄຊຍະວົງ ໄດ້ລາຍງານວ່າ: ທາງການນໍາເມືອງປາກແບງ ໄດ້ມີການປຶກສາຫາລື ແລະ ຫ້າງຫາກະກຽມທີ່ຈະສ້າງພະເຈົ້າໃຫຍ່ ພຸດທະປາລະມີ ສີລິຈອມແຈ້ງ ໂດຍໄດ້ກໍານົດຮູບແບບ, ລັກສະນະ, ຂະໜາດ ແລະ ສະຖານທີ່ແລ້ວນໍາສະເໜີໄປຍັງການນໍາແຂວງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອອະນຸມັດໃນການກໍ່ສ້າງ, ຈຸດປະສົງກໍເພື່ອເປັນບ່ອນສັກກະລະບູຊາກາບໄຫວ້ຂອງປະຊາຊົນບັນດາເຜົ່າ ທີ່ມີຈິດໃຈເຫລືອມໃສ່ຕໍ່ພຸດທະສາສະໜາ ທັງກໍານົດເປັນສະຖານທີ່ທ່ອງທ່ຽວທີ່ສໍາຄັນຂອງເມືອງປາກແບງໃນການດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ແນໃສ່ເຮັດໃຫ້ເມືອງປາກແບງ, ກາຍເປັນເມືອງທ່ອງທ່ຽວຕາມທິດທາງແຜນການລວມຂອງແຂວງ, ສໍາລັບພະພຸດທະຮູບ ພຸດທະປາລະມີ ສີລິຈອມແຈ້ງ ທີ່ຈະສ້າງຂຶ້ນໃນຄັ້ງນີ້ ມີຖານທັງໝົດ 25 ຄູນ 28,9 ແມັດ, ມີລວງສູງທັງໝົດ 15.999 ແມັດ ໂດຍຈະໃຊ້ງົບປະມານໃນການກໍ່ສ້າງທັງໝົດປະມານ 2 ຕື້ກວ່າກີບ ແລະ ຄາດວ່າຈະໃຫ້ສ້າງສໍາເລັດພາຍໃນໄລຍະເວລາ 3 ປີ.

ພິທີວາງສີລາລຶກຄັ້ງນີ້ ແມ່ນໄດ້ດໍາເນີນໄປຕາມພິທີທາງສາສະໜາ ເປັນຕົ້ນແມ່ນໄຕ້ທູບທຽນບູຊາພຣະຣັດຕະນະໄຕ, ໄຫວ້ພຣະຮັບສິນ, ສູດໄຊຍັນໂຕ, ຖວາຍກອງທານ, ວັດທຸທານຕ່າງໆ, ຮັບພອນ, ຢາດນໍ້າ, ການນໍາສູນກາງ, ແຂວງ ແລະ ເມືອງ ພ້ອມກັນຕອກໄມ້ມຸງຄຸນ, ວາງດິນຈີ່ເງິນ, ດິນຈີ່ຄໍາ ແລະ ວາງແຜ່ນສີລາລຶກຢ່າງເປັນທາງການ.

ໃນໂອກາດດັ່ງກ່າວ, ທ່ານ ຄໍາດີ ວົງລ້ອມ ໄດ້ໂອ້ລົມຕໍ່ພິທີ ໂດຍທ່ານໄດ້ຮຽກຮ້ອງໃຫ້ການນໍາເມືອງ, ຄະນະຮັບຜິດຊອບໂຄງການກໍ່ສ້າງພະເຈົ້າໃຫ່ຍ ພ້ອມກັນບຸກບືນ, ສາມັກຄີກັນ ເພື່ອເຮັດໃຫ້ໂຄງການດັ່ງກ່າວ ບັນລຸຜົນສໍາເລັດຕາມຈຸດປະສົງທີ່ວາງໄວ້, ບັນດານັກທຸລະກິດ, ພໍ່ຄ້າຊາວຂາຍ, ຜູ້ປະກອບການທຸກພາກສ່ວນທັງພາຍໃນ ແລະ ຕ່າງປະເທດ ຂໍໃຫ້ຊ່ວຍເຫລືອອຸປະຖໍາຮ່ວມກິນຮ່ວມທານທາງດ້ານວັດຖຸ, ເງິນທອງ ແລະ ອື່ນໆ ຕາມຄວາມສາມາດຕົວຈິງຂອງບຸກຄົນ, ນິຕິບຸກຄົນ ຢ່າງສົມເຫດສົມຜົນ, ພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນເມືອງປາກແບງ ພ້ອມຈິດພ້ອມໃຈສາມັກຄີກັນມີສ່ວນຮ່ວມ ເພື່ອສ້າງຂະບວນການຕ່າງໆ ເຮັດໃຫ້ວຽກງານການສ້າງພະເຈົ້າໃຫຍ່ໃນຄັ້ງນີ້ ເດີນແມ່ນແລ່ນສະດວກແຕ່ຕົ້ນຕະຫລອດປາຍ ແລະ ທ່ານໄດ້ລັ່ນຄ້ອງ 9 ບາດ ເພື່ອເປັນເລີກງາມຍາມດີຂອງໂຄງການກໍ່ສ້າງພະພຸດທະຮູບໃນຄັ້ງນີ້.

(ແສງພອນ ອິນນະລົງ)






# ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ຊ່ວຍວຽກ ສພຂ ອຸດົມໄຊ



(ສພຊ) ຕອນເຊົ້າຂອງວັນອັງຄານ, ວັນທີ 10 ພຶດສະພາ 2022 ຢູ່ທີ່ສະໂມສອນເມືອງນາໝໍ້, ສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ເປີດກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຊ່ວຍວຽກສະພາປະຊາຊົນແຂວງອຸດົມໄຊ ໂດຍການເປັນປະທານຂອງທ່ານ ຄໍາດີ ວົງລ້ອມ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II; ເຂົ້າຮ່ວມກອງປະຊຸມໂດຍມີທ່ານ ຄໍາເຜີຍ ງອນວັນຄໍາ ກໍາມະການປະຈໍາພັກແຂວງ, ຮອງປະທານ ສພຂ, ມີທ່ານ ນາງ ບົວພອນ ແກ້ວມະນີ ຮອງເລຂາພັກເມືອງ, ສະມາຊິກສະພາປະຊາຊົນແຂວງປະຈໍາເຂດເລືອກຕັ້ງເມືອງນາໝໍ້, ມີກໍາມະການປະຈໍາສະພາປະຊາຊົນແຂວງ, ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກຄະນະສະມາຊິກສະພາປະຊາຊົນແຂວງປະຈໍາເຂດເລືອກຕັ້ງ 7 ເມືອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການສະເໜີກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງ, ຂໍ້ຕົກລົງຮ່ວມລະຫວ່າງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ ສະບັບເລກທີ 70/ອຂ, ລົງວັນທີ 4 ກຸມພາ 2022 ແລະ ໄດ້ຮັບຟັງການບັນຍາຍກ່ຽວກັບເທັກນິກການເປັນພິທີກອນ ຫລືຄະນະຈັດຕັ້ງພິທີການ. ຈາກນັ້ນ, ກອງປະຊຸມໄດ້ເປີດກວ້າງໃຫ້ຜູ້ເຂົ້າຮ່ວມມີຄໍາຄິດຄໍາເຫັນ, ສົນທະນາແລກປ່ຽນ ຕໍ່ກັບບັນດາເນື້ອໃນຕ່າງໆ ທີ່ນໍາເຂົ້າຜ່ານໃນກອງປະຊຸມເຝິກອົບຮົມໃນຄັ້ງນີ້ ແລະ ໄດ້ຈັດແບ່ງເປັນກຸ່ມເຝິກຕົວຈິງອີກດ້ວຍ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຊ່ວຍວຽກສະພາປະຊາຊົນແຂວງອຸດົມໄຊ ໃນເວລາຕິດຕາມກວດກາ, ລົງພົບປະປະຊາຊົນແຕ່ລະຄັ້ງຂອງສະມາຊິກສະພາປະຊາຊົນແຂວງ ໃນຖານະທີ່ເປັນເສນາທິການໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ໃຫ້ມີຄວາມຮູ້ຄວາມສາມາດໃນຫລາຍດ້ານ, ໃນການຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ຖືກຕ້ອງ, ສອດຄ່ອງຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ.

(ແສງພອນ ອິນນະລົງ)

# ປັບປຸງມະຕິວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງ ຄລຂ ໄຊສົມບູນ




(ສພຊ) ຕອນເຊົ້າຂອງວັນທີ 10 ພຶດສະພາ 2022 ຄະນະເລຂາທິການສະພາປະຊາຊົນແຂວງ (ຄລຂ) ໄຊສົມບູນ ໄດ້ເປີດກອງປະຊຸມຂຶ້ນທີ່ຫ້ອງປະຊຸມຂອງຕົນ ພາຍໃຕ້ການເປັນປະທານຂອງທ່ານ ນາງ ຂັນກາບ ໄຊຍະກຸມມານ ເລຂາທິການສະພາປະຊາຊົນແຂວງໄຊສົມບູນ; ເຂົ້າຮ່ວມມີທ່ານ ບີ ເຣີ, ທ່ານ ຢີຊົ່ງ ຕົ່ງເລັ່ງ ຮອງເລຂາທິການສະພາປະຊາຊົນແຂວງ ແລະ ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫລອດຮອດພະນັກງານວິຊາການພາຍໃນຄະນະເລຂາທິການສະພາປະຊາຊົນແຂວງໄຊສົມບູນ ເຂົ້າຮ່ວມຢ່າງພ້ອມພຽງ.

ໂອກາດດັ່ງກ່າວ, ທ່ານ ນາງ ຂັນກາບ ໄຊຍະກຸມມານ ໄດ້ກ່າວຈຸດປະສົງ ແລະ ໃຫ້ຮູ້ວ່າ ກອງປະຊຸມໃນຄັ້ງນີ້ແມ່ນການເປີດໂອກາດໃຫ້ພະນັກງານພາຍໃນ ຄລຂ ໄຊສົມບູນ ພ້ອມກັນສຸມສະຕິປັນຍາ ປະກອບຄໍາຄິດເຫັນ, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ແລະ ພ້ອມທັງແກ້ໄຂຈຸດບົກພ່ອງ ທີ່ຍັງເຫັນວ່າ ບໍ່ທັນລະອຽດໃນທີ່ຜ່ານມາ; ຈາກນັ້ນ, ໄດ້ຮັບຟັງການລາຍງານມະຕິວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງ ຄລຂ ໂດຍທ່ານ ບີ ເຣີ ຮອງເລຂາທິການ. ພ້ອມນັ້ນ, ທີ່ປະຊຸມໄດ້ຜັດປ່ຽນກັນປະກອບຄໍາຄິດ, ຄໍາເຫັນຕໍ່ມະຕິດັ່ງກ່າວ ຢ່າງກົງໄປກົງມາ ແລະ ສ້າງສັນ ເພື່ອໃຫ້ໃຫ້ມະຕິດັ່ງກ່າວມີເນື້ອໃນຄົບຖ້ວນ, ສອດຄ່ອງກັບວຽກງານຕົວຈິງ ແລະ ສາມາດຈັດຕັ້ງປະຕິບັດໄດ້.

ກອງປະຊຸມຄັ້ງນີ້, ກໍເພື່ອເປັນການຜັນຂະຫຍາຍກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ເປັນອັນລະອຽດ ແລະ ເປັນບ່ອນອີງ ໃຫ້ແກ່ຄະນະເລຂາທິການ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງມີປະສິດທິຜົນ ຈຶ່ງມີຄວາມຈໍາເປັນຕ້ອງປັບປຸງຄືນກ່ຽວກັບມະຕິວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງ ຄລຂ ທີ່ຈະໄດ້ນໍາໃຊ້ ແລະ ຈັດຕັ້ງປະຕິບັດຕົວຈິງ ໃນຕໍ່ໜ້າ ແລະ ຕ້ອງໃຫ້ຊອດຄ່ອງກັບ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ.

ຜ່ານການລາຍງານ ແລະ ປະກອບຄໍາຄິດເຫັນແລ້ວ, ທີ່ປະຊຸມໄດ້ອີງຕາມສຽງສ່ວນຫລາຍ ໂດຍໄດ້ເຫັນດີຕົກລົງ ໃຫ້ ຄລຂ ໄຊສົມບູນ ປະກອບມີຂະແໜງທີ່ເປັນເສນາທິການ ເຊິ່ງປະກອບມີ 3 ຂະແໜງການຄື: ຂະແໜງຄົ້ນຄວ້າ-ສັງລວມ ແລະ ຂໍ້ມູນຂ່າວສານ, ຂະແໜງບໍລິຫານ-ການເງິນ, ຂະແໜງຈັດຕັ້ງ-ກວດກາ ແລະ ວຽກງານຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ-ສະມາຊິກສະພາປະຊາຊົນແຂວງໄຊສົມບູນ.

(ນາງ ອໍາໄພພອນ ແກ້ວວິໄລ)



# ສພຂ ສາລະວັນ ສ້າງຄວາມເຂັ້ມແຂງໃຫ້ ສສຂ ແລະ ພະນັກງານທີ່ສັງກັດ ຄສຜງ



(ສພຊ) ໃນວັນທີ 9 ພຶດສະພາ 2022 ຢູ່ທີ່ສະໂມສອນຂອງເມືອງເລົ່າງາມ ແຂວງສາລະວັນ ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ເປີດກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ພະນັກງານ-ລັດຖະກອນ ທີ່ສັງກັດຢູ່ໃນຄະນະກຳມະການເສດຖະກິດ, ແຜນການແລະການເງິນ (ຄສຜງ) ຂຶ້ນຢ່າງເປັນທາງການ (ດ້ວຍຮູບແບບກອງປະຊຸມເຊິ່ງໜ້າ ແລະ ແບບວີດີໂອທາງໄກ) ໂດຍການເປັນປະທານຂອງທ່ານ ສີເຮັງ ທອມສິມບັດ ຮອງເລຂາພັກແຂວງ, ປະທານ ສພຂ; ເຂົ້າຮ່ວມມີຄະນະປະຈຳ ສພຂ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຜູ້ປະສານງານໂຄງການ, ສສຂ ທີ່ສັງກັດຢູ່ ຄສຜງ, ມີບັນດາທ່ານວິທະຍາກອນຈາກສູນກາງ ແລະ ພາຍໃນແຂວງ ພ້ອມດ້ວຍສຳມະນາກອນເຂົ້າຮ່ວມເຝິກອົບຮົມໃນຄັ້ງນີ້.

ການເຝິກຄັ້ງນີ້, ສຳມະນາກອນ ຈະໄດ້ຮຽນຮູ້ໃນຫົວຂໍ້ທີ່ສຳຄັນຕ່າງໆ ຄື: ກ່ຽວກັບການຕິດຕາມກວດກາແຜນງົບປະມານ ແລະ ແຜນພັດທະນາເສດຖະກິດ-ສັງຄົມ; ການຄົ້ນຄວ້າແຜນພັດທະນາເສດຖະກິດ-ສັງຄົມ ທີ່ຕິດພັນກັບບັນດາຄາດໝາຍມະຫາພາກ, ການຈັດສັນງົບປະມານ ແລະ ການລົງທຶນໃນຂົງເຂດເສດຖະກິດ; ຂະບວນການສ້າງແຜນການລົງທຶນຂັ້ນແຂວງປະຈຳປີ; ການພິຈາລະນາຮັບຮອງເອົາແຜນການລົງທຶນຂອງ ສພຂ; ວິທີການຄິດໄລ່ລວມຍອດຜະລິດຕະພັນພາຍໃນ (GDP) ແລະ ການຄິດໄລ່ລວມຍອດລາຍໄດ້ແຫ່ງຊາດ (GIN); ພ້ອມກັນນັ້ນ, ຈະໄດ້ລະດົມຄວາມຄິດເຫັນໃສ່ຮ່າງຂໍ້ຕົກລົງ ວ່າດ້ວຍກົນໄກການພົວພັນປະສານງານລະຫວ່າງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ກັບບັນດາພະແນກການທີ່ກ່ຽວຂ້ອງ ທັງເຜີຍແຜ່ມະຕິຂອງຄະນະປະຈຳ ສພຂ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄສຜງ ສພຂ ສາລະວັນ.

ການເຝິກອົບຮົມດັ່ງກ່າວ ແມ່ນເປັນການຍົກສູງປະສິດທິພາບໃນການປະຕິບັດໜ້າທີ່ວຽກງານຂອງ ສສຂ ສັງກັດຢູ່ ຄສຜງ ແລະ ພະນັກງານ-ລັດຖະກອນ ເພື່ອສ້າງທາງດ້ານຫລັກການ, ສ້າງຄວາມເປັນເອກະພາບຕໍ່ເນື້ອໃນຕ່າງໆ ເພື່ອໃຫ້ໄດ້ຮັບໝາກຜົນຕາມລະດັບຄາດໝາຍທີ່ວາງໄວ້ ແລະ ສາມາດນຳໄປໃຊ້ໃນໜ້າທີ່ວຽກງານຕົວຈິງ.

ກອງປະຊຸມຄັ້ງນີ້ ແມ່ນໄດ້ຮັບການສະໜັບສະໜູນຈາກແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ແຜນງານເຊກາ).

(ດີລຳພົນ ພົມມະຈັນ ແລະ ຄັດສອນ ຮຸ່ງສະຫວ່າງ)



# ສພຂ ເຊກອງ ຕິດຕາມກວດກາບັນດາ ຫົວໜ່ວຍທຸລະກິດ ຢູ່ເມືອງກະລຶມ

(ສພຊ) ລະຫວ່າງວັນທີ 9-11 ພຶດສະພາຜ່ານມາ, ທ່ານ ດົງເພັດ ພະຍົມ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ, ປະທານສະພາປະຊາຊົນແຂວງ (ສພຂ) ເຊກອງ ພ້ອມດ້ວຍຄະນະ ສົມທົບພະແນກພະລັງງານ ແລະ ບໍ່ແຮ່ແຂວງເຊກອງ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານການເງິນ ນຳບັນດາຫົວໜ່ວຍທຸລະກິດຢູ່ເມືອງກະລຶມ ແຂວງເຊກອງ.



ການເຄື່ອນໄຫວເຮັດວຽກຂອງຄະນະ ສພຂ ໃນຄັ້ງນີ້ ແມ່ນໄດ້ຕິດຕາມກວດກາປະຕິບັດວຽກງານຕົວຈິງຢູ່ພາກສະໜາມ ເປັນຕົ້ນແມ່ນຕິດຕາມກວດກາຄວາມຄືບໜ້າຂອງໂຄງການ, ບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆຂອງໂຄງການ ໃນນີ້, ມີໂຄງການກໍ່ສ້າງເຂື່ອນໄຟຟ້າຫ້ວຍລະແງ, ບໍລິສັດ IHC Mining ຈຳກັດຜູ້ດຽວ (ເຂດບ້ານປຣາເລ), ບໍລິສັດສັດຊຸດຄົ້ນໄມ້ໜ້າເຂື່ອນຫ້ວຍລະແງ (ເຂດບ້ານປະນອນ ແລະ ບ້ານອາບືນ), ໂຄງການກໍ່ສ້າງຂົວ 7 ແຫ່ງ ຂອງບໍລິສັດໄຊຊະນະ ແລະ ບໍລິສັດ ພະລັງງານໄຟຟ້າ ເຊກອງ ຈຳກັດ (XPPL) ແລະ ໂຄງການອື່ນໆອີກຈຳນວນໜຶ່ງ.

ຜ່ານການຕິດຕາມກວດກາຕົວຈິງເຫັນວ່າ ການດຳເນີນງານບາງໂຄງການແມ່ນມີຄວາມຄືບໜ້າ ແລະ ບາງໂຄງການແມ່ນມີຄວາມລ້າຊ້າບໍ່ທ່ວງທັນຕາມກຳນົດເວລາ ເນື່ອງຈາກວ່າສະພາບອາກາດໃນເຂດດັ່ງກ່າວແມ່ນບໍ່ປົກກະຕິ, ເປັນເຂດພູດອຍຫ່າງໄກສອກຫລີກ ບວກກັບງົບປະມານທີ່ຈະນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງຍັງບໍ່ທັນຕອບສະໜອງໄດ້ເທົ່າທີ່ຄວນ.

ໂອກາດດຽວກັນນີ້, ຄະນະທີມງານ ສພຂ ຍັງໄດ້ພົບປະພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງຢູ່ບ້ານປຣາເລ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 83 ຄົນ ຍິງ 33 ຄົນ, ມີອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ 3 ບ້ານເຂົ້າຮ່ວມ ຄື: ບ້ານປຣາເລ, ບ້ານຈະຕີ ແລະ ບ້ານອາເກວ ໂດຍຮັບຟັງການລາຍງານໂດຍຫຍໍ້ ກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານພາຍໃນບ້ານຈາກອຳນາດການປົກຄອງບ້ານ ແລະ ຄຳສະເໜີຕ່າງໆ ໂດຍສະເພາະດ້ານພື້ນຖານໂຄງລ່າງຂອງບ້ານ ເປັນຕົ້ນແມ່ນດ້ານຄົມມະນາຄົມ, ໄຟຟ້າ, ທີ່ດິນປຸກສ້າງ, ດ້ານສຶກສາ, ສາທາ, ຕົວເລກລັດຖະກອນຄູ ແລະ ແພດປະຈຳສຸກສາລາ ສຳລັບຄົນພື້ນຖານໃນເຂດດັ່ງກ່າວ.

(ນັກຂ່າວເຂດທີ 16)

# ທາບທາມຮ່າງຂໍ້ຕົກລົງວ່າດ້ວຍກອງທຶນເລືອດ ແຂວງໄຊຍະບູລີ

(ສພຊ) ຕອນບ່າຍຂອງວັນທີ 11 ພຶດສະພາ 2022 ຢູ່ທີ່ສະໂມສອນເມືອງຫົງສາ ແຂວງໄຊຍະບູລີ ໄດ້ຈັດກອງປະຊຸມທາບທາມຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການສ້າງຕັ້ງກອງທຶນເລືອດ ແຂວງໄຊຍະບູລີ ໂດຍການນຳສະເໜີຂອງທ່ານ ວັນນະສິງ ມຸງຄຸນສະຫວັດ ຫົວໜ້າອົງການກາແດງ ແຂວງໄຊຍະບູລີ, ມີທ່ານ ສົມມະນາ ປິ່ນທິບ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ, ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງໄຊຍະບູລີ, ມີທ່ານ ສົມສີ ພົມມະຈັນ ຮອງເລຂາພັກເມືອງ ປະທານກວດກາພັກ-ຫົວໜ້າກວດກາລັດເມືອງ, ມີບັນດາການນຳຂອງເມືອງ, ມີສະມາຊິກສະພາປະຊາຊົນແຂວງປະຈຳເມືອງ, ພະນັກງານຫລັກແຫລ່ງອ້ອມຂ້າງເມືອງ, ນາຍບ້ານເທສະບານ ແລະ ຂະແໜງການກ່ຽວຂ້ອງເຂົ້າຮ່ວມ.



ຈຸດປະສົງ, ກໍເພື່ອເປັນການທາບທາມເອົາຄຳຄິດຄຳເຫັນຈາກພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຢູ່ຂັ້ນເມືອງ ທີ່ໄດ້ປະກອບໃສ່ໃນຮ່າງຂໍ້ຕົກລົງສະບັບນີ້, ໃຫ້ຖືກຕ້ອງສອດຄ່ອງ, ສົມບູນ ແລະ ແທດເໝາະກັບສະພາບຕົວຈິງ ຈາກນັ້ນ, ຈຶ່ງຈະນຳໄປຜ່ານກອງປະຊຸມຂອງສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາຮັບຮອງເອົາ.

ຮ່າງຂໍ້ຕົກລົງສະບັບດັ່ງກ່າວນີ້, ປະກອບມີ 7 ໝວດ, 27 ມາດຕາ ທັງນີ້, ກໍແມ່ນກຳນົດຫລັກການ, ລະບຽບການ, ວິທີການ, ມາດຕະການ ແລະ ລະບຽບການກ່ຽວກັບການນຳໃຊ້ກອງທຶນເລືອດ ເພື່ອປຸກລະດົມ, ຂົນຂວາຍ ແລະ ສະສົມທຶນ ແນໃສ່ສ້າງໃຫ້ມີທຶນພຽງພໍ ເພື່ອພັດທະນາ, ສົ່ງເສີມໃຫ້ມີຄວາມຍືນຍົງ ແລະ ສະໜອງທຶນ, ສະໜອງເລືອດທີ່ປອດໄພໃຫ້ແກ່ປະຊາຊົນພາຍໃນແຂວງ ທີ່ເຈັບເປັນ ແລະ ປິ່ນປົວດ້ວຍເລືອດ ໃຫ້ໄດ້ຮັບການບໍລິການທີ່ພຽງພໍ ແລະ ທັນກັບເວລາ ແນໃສ່ການປະກອບສ່ວນພັດທະນາເສດທະກິດ-ສັງຄົມຂອງແຂວງອີກດ້ວຍ.

(ກິດຕິສັກ ບົວໄລ)

# ສພຂ ຫົວພັນ ແລະ 5 ພາກສ່ວນ ກ່ຽວຂ້ອງປຶກສາວຽກງານຮ່ວມກັນ



(ສພຊ) ຕອນເຊົ້າວັນທີ 11 ພຶດສະພາ 2022 ຢູ່ທີ່ຫ້ອງປະຊຸມຄະນະປະຈຳສະພາປະຊາຊົນ ແຂວງຫົວພັນ ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມຮ່ວມກັບຄະນະປະສານງານທີ່ຖືກແຕ່ງຕັ້ງຈາກກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ພະແນກຍຸຕິທຳແຂວງ ໂດຍການເປັນປະທານຂອງ ທ່ານ ພັທ. ທອງພັນ ພັດທະວົງ ກຳມະການຄະນະປະຈຳ, ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບສະພາປະຊາຊົນແຂວງ ຕະຫລອດຮອດພະນັກງານເສນາທິການຂະແໜງຍຸຕິທຳ ແລະ ກອງບັນຊາການປ້ອງການຊາດ-ປ້ອງກັນຄວາມສະຫງົບເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນປຶກສາຫາລືຄົ້ນຄວ້າເອກະພາບກັນກ່ຽວກັບການນຳເອົາບົດບັນທຶກຂອດການປະສານງານທີ່ເຊັນແລ້ວນັ້ນ ນຳໄປຈັດຕັ້ງຜັນຂະຫຍາຍເຂົ້າສູ່ໜ້າທີ່ວຽກງານຂອງກົມກອງຕົນເອງ, ໃນການປະສານງານເຊິ່ງກັນແລະກັນ, ການສະໜອງຂໍ້ມູນທີ່ສຳຄັນຕ່າງໆທີ່ຈຳເປັນ ໃນຂົງເຂດວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ພະແນກຍຸຕິທຳ ໃຫ້ແກ່ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ.

ຕອນທ້າຍຂອງກອງປະຊຸມ, ປະທານກອງປະຊຸມ ຍັງໄດ້ເນັ້ນໜັກໃຫ້ຜູ້ທີ່ຖືກແຕ່ງຕັ້ງດັ່ງກ່າວ ຈົ່ງນຳເອົາເນື້ອໃນຈິດໃຈ ທີ່ກອງປະຊຸມເອກະພາບຮ່ວມກັນນັ້ນ ນຳໄປຈັດຕັ້ງຜັນຂະຫຍາຍໃຫ້ຖືກຕ້ອງຕາມສິດ ແລະ ພາລະບົດບາດຂອງຕົນ ເພີ່ມທະວີໃນຂອດການປະສານງານໃຫ້ວ່ອງໄວ ແລະ ມີຜົນສຳເລັດ.

(ເວີນທອງ ແກ້ວບຸນມີ)

108 ສາລະ

# ມົນລະພິດ

# ດອກຫຍ້າ



ມົນລະພິດ ໝາຍເຖິງສິ່ງເສດເຫລືອ, ວັດຖຸອັນຕະລາຍ ແລະ ມວນສານອື່ນໆ ລວມທັງຂີ້ຕົມ, ຂີ້ເຫຍື້ອ ຫລື ສິ່ງເສດເຫລືອ ຈາກການປ່ອຍຖິ້ມອອກຈາກຈຸດທີ່ເກີດມົນລະພິດ ຫລື ທີ່ມີຢູ່ແລ້ວໃນສະພາບແວດລ້ອມທຳມະຊາດ ເຊິ່ງສິ່ງຜົນກະທົບຕໍ່ຄຸນນະພາບຂອງສິ່ງແວດລ້ອມ ຫລື ມີສະພາບທີ່ເປັນພິດ ແລະ ອັນຕະລາຍຕໍ່ສຸຂະພາບຂອງປະຊາຊົນ ລວມເຖິງລັງສີ, ຄວາມຮ້ອນ, ແສງສະຫວ່າງ, ສຽງ, ກິ່ນ, ການສັ່ນສະເທືອນ ຫລື ສິ່ງລົບກວນອື່ນໆທີ່ເກີດ ຫລື ປ່ອຍອອກມາຈາກແຫລ່ງມົນລະພິດ; ໃນກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ ເລກທີ 026/ປປທ, ວັນທີ 17/1/2013 ມາດຕາ 2 ມົນລະພິດ ແມ່ນສານເຄມີ, ກຳມັນຕະພາບລັງສີ, ຄວັນ ລວມທັງແສງ, ສຽງ, ກິ່ນ, ຄວາມສັ່ນສະເທືອນ ແລະ ຄວາມຮ້ອນທີ່ເຈືອນປົນໃນອາກາດ, ດິນ, ນ້ຳ ທີ່ມີຄ່າຄວາມເຂັ້ມຂຸ້ນເກີນມາດຕະຖານຄຸນນະພາບສິ່ງແວດລ້ອມ ຫລື ມາດຖານການຄວາມຄຸມມົນລະພິດແຫ່ງຊາດ ເຊິ່ງເກີດຈາກການກະທຳຂອງມະນຸດ ຫລື ຕາມທຳມະຊາດທີ່ມີຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ສິ່ງມີຊີວິດອື່ນ ແລະ ລະບົບນິເວດ.

ປັດຈຸບັນ, ສິ່ງແວດລ້ອມມີການປ່ຽນແປງໄປເລື້ອຍ ຈົນເຮັດໃຫ້ເກີດຜົນກະທົບຕໍ່ການດຳລົງຊີວິດຂອງມວນມະນຸດ; ເຮົາມັກຈະໄດ້ຍິນຄຳວ່າ: ອາກາດເປັນພິດ, ນ້ຳເສຍ, ສຽງເປັນພິດ... ເຊິ່ງສາເຫດຫລັກທີ່ພາໃຫ້ເກີດບັນຫາເຫລົ່ານັ້ນ ແມ່ນມາຈາກມະນຸດນັ້ນເອງເປັນຜູ້ກະທຳ ເປັນຕົ້ນແມ່ນການຕັດໄມ້ທຳລາຍປ່າ, ການຜະລິດສານສັງເຄາະທີ່ບໍ່ສາມາດລະລາຍໄດ້ ຫລື ລະລາຍຍາກ ເປັນຕົ້ນແມ່ນຖົງຢາງປລາສະຕິກ, ໂຟມໃສ່ອາຫານ ເຊິ່ງເຮັດໃຫ້ປະລິມານຂີ້ເຫຍື້ອນັບມື້ນັບເພີ່ມຫລາຍຂຶ້ນ; ການຜະລິດສານບາງຢ່າງທີ່ເປັນກ໊າດເຊັ່ນ: ຟີອອນທີ່ຊ່ວຍໃນການສີດສະເປ ແລະ ໃຊ້ໃນເຄື່ອງເຮັດຄວາມເຢັນ ກໍມີປະລິມານທີ່ເພີ່ມຂຶ້ນ ເຊິ່ງມັນຈະໄປທຳລາຍຊັ້ນໂອໂຊນທີ່ເປັນຊັ້ນບັນຍາກາດທີ່ຫຸ້ມຫໍ່ໂລກໄວ້ ແລະ ສົ່ງຜົນໃຫ້ໂລກຮ້ອນຂຶ້ນນັ້ນເອງ; ການສ້າງຜະລິດຕະພັນແທນວັດຖຸດິບທີ່ໄດ້ຈາກທຳມະຊາດ ເປັນຕົ້ນແມ່ນການໃຊ້ສະບູຝຸ່ນ, ສະບູກ້ອນ... ເມື່ອໃຊ້ແລ້ວສິ່ງເຫລົ່ານີ້ຈະຕົກຄ້າງເປັນມົນລະພິດຢູ່ໃນອາກາດ, ນ້ຳ ແລະ ດິນ ເຮັດໃຫ້ເກີດຜົນເສຍຕໍ່ພືດ, ສັດ ແລະ ມະນຸດດ້ວຍກັນເອງ; ການສ້າງອຸປະກອນເຄື່ອງໄຟຟ້າບາງຊະນິດທີ່ໃຫ້ຄວາມຮ້ອນ, ແສງ, ສຽງ ທີ່ເຮັດໃຫ້ເກີດມົນລະພິດຕໍ່ມະນຸດນັບມື້ນັບຫລາຍຂຶ້ນ; ການສ້າງຍານພາຫະນະທີ່ໃຊ້ໃນການເດີນທາງເຊັ່ນ: ລົດຈັກ, ລົດໃຫຍ່, ຍົນ... ເຮັດໃຫ້ມີການປ່ອຍກ໊າສທີ່ເຫລືອຈາກການເຜົາໄໝ້ຂອງນ້ຳມັນເຊື້ອໄຟ ອັນໄດ້ແກ່ອັອກຊາຍຂອງນິໂຕແຊນ ແລະ ອົກຊີແຊນ ທີ່ມີປະລິມານທີ່ເພີ່ມຂຶ້ນໃນອາກາດ.

ມະນຸດເຮົາເປັນຄົນສ້າງມົນລະພິດຂຶ້ນມາ ກ້າວໄປເຖິງການທຳລາຍສິ່ງແວດລ້ອມທີ່ເປັນທຳມະຊາດໃຫ້ສູນເສຍໄປເທື່ອລະເລັກລະນ້ອຍ; ດ້ວຍເຫດນັ້ນຈຶ່ງເກີດມີຄຳຖາມຂຶ້ນໃນສັງຄົມວ່າ ແມ່ນໃຜຈະເປັນຜູ້ແກ້ໄຂສິ່ງແວດລ້ອມທີ່ສູນເສຍໄປໃຫ້ກັບສູ່ສະພາບທີ່ດີຂຶ້ນ? ແຕ່ຄຳຕອບທີ່ດີທີ່ສຸດ ແລະ ເຮັດງ່າຍທີ່ສຸດ ກໍຄືທຸກຄົນຈະຕ້ອງຊ່ວຍກັນແກ້ປັບປ່ຽນພຶດຕິກຳຂອງຕົນເອງຕັ້ງແຕ່ມື້ນີ້ເປັນຕົ້ນໄປ ເພື່ອຈະເຮັດໃຫ້ບັນຫາສິ່ງແວດລ້ອມເປັນພິດຫລຸດລົງໃນອານາຄົດ ແລະ ເພື່ອທີ່ເຮົາຈະດຳລົງຊີວິດຕໍ່ໄປໃນສິ່ງແວດລ້ອມທີ່ດີໆໄດ້ຢ່າງຍາວນານ.

ສາລາກະວີ

# ສັງວຽນ ສັງຄົມ

# ຫລານເຈົ້ານ້ອຍ

j ເປັນນັກມວຍຫມັ່ນຊ້ອມ ຕີຕ່ອຍເລີຍໆ
ກ້າມແຂນຂາແຂງແຮງ ດັ່ງໃຈປະສົງໄວ້
ນັກມວຍພາຍໃນຄ້າຍ ໂຕເອງເບົ່າຢູ່
ບໍ່ມີໃຜອາດສູ້ ຕີຕ້ານຕ່ອຍຄືນ

j ບາດເຖິງທີທີ່ຂຶ້ນ ຢືນຢູ່ສັງວຽນ
ປ່ຽນຄູ່ຄົນຊິງຊົກ ຕ່ອຍຕີ ບໍ່ຄືກີ້
ລີລາລາຍມວຍໄມ້ ເຂົ້າເກີນກາຍຄາດ
ຈຶ່ງວ່າມາພາດພັ້ງ ຈັ້ງຂາຢືນບໍ່ໄດ້ ເລີຍລົ້ມຄາບດິນ

j ເປັນນັກຮຽນເກັ່ງກ້າ ຊານສະຫລາດເຫລືອຫລາຍ
ກາຍຫມູ່ມວນສະຫາຍ ຮ່ວມຮຽນໃນຫ້ອງ
ຊື່ສຽງເນືອງນັນກ້ອງ ສະຫມອງໄວເກີນຫມູ່
ບໍ່ມີໃຜທຽບໄດ້ ພຽງສ້ຽວເສດຕີນ

j ຜົນການເສັງສອບໄດ້ ທີນຶ່ງຕາມຫວັງ
ຕັ້ງແຕ່ຕອນປີກຽມ ຮອດປີເທີມທ້າຍ
ໃບປະກາດ ສີແດງໄດ້ ຕາມໃຈຫມາຍມຸ່ງ
ລຸງອາວອາພີ່ນ້ອງ ສະຫລອງລ້າງອວດຄົນ

j ຫລາຍລະດູຜ່ານພົ້ນ ທົນຊອກຫາງານ
ປະລິນຍາສີແດງ ຍື່ນໄປຫລາຍຫມ້ອງ
ໄດ້ແຕ່ຄອງຄອຍຖ້າ ເສຍເວລາດາຍເປົ່າ
ເອົາໃບແດງອວດລ້າ ແຕ່ຫາງານບໍ່ໄດ້ ຂໍໃຫ້ຮ່ຳຮອນ ແດ່ໃດ

j ຄົນທີ່ເຂົາບໍ່ໄດ້ ໃບປະກາດສີແດງ
ຜັດວ່າມີງານທຳ ດັ່ງໃຈຫມາຍໄວ້
ກ້າວຫນ້າເກີນກາຍຜູ້ ຮຽນດີຮຽນເກັ່ງ
ຍ້ອນເຂົາເຮັງ ຫລື ເຂົາເກັ່ງນອກຫ້ອງ ຮຽນ ນັ້ນກວ່າກັນ?



ສຸກສະບາຍຫາຍໂຣຄາ

# ວິທີກະຕຸ້ນການຂັບຖ່າຍ

# ສາວແອ່ນ



ທ່ານເຄີຍມີບັນຫາຖ່າຍບໍ່ອອກ ຫລື ອາຈົມແກ່ນ ຈົນເຮັດໃຫ້ຖ່າຍລຳບາກຕ້ອງນັ່ງຢູ່ໃນຫ້ອງນ້ຳເປັນຊົ່ວໂມງບໍ່ ເຊິ່ງບັນຫາມັກເກີດຈາກລະບົບຍ່ອຍອາຫານ; ສະນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ເຮົາມີວິທີຊ່ວຍໃຫ້ລະບົບຍ່ອຍອາຫານເຮັດວຽກໄດ້ຢ່າງເປັນປົກກະຕິ ໂດຍສະເພາະຊ່ວຍໃນການຂັບຖ່າຍຕອນເຊົ້າຂອງທຸກໆມື້ ດ້ວຍ 5 ວິທີທີ່ຢາກແນະນຳໃຫ້ໄດ້ລອງດັ່ງຕໍ່ໄປນີ້:

1. ດື່ມນ້ຳທັນທີຫລັງຈາກຕື່ນນອນ.

ເພື່ອກະຕຸ້ນການຂັບຖ່າຍຂອງລຳໄສ້ໃນຕອນເຊົ້າ ແນະນຳໃຫ້ດື່ມນ້ຳ 1 ຈອກທັນທີຫລັງຈາກຕື່ນນອນ ເຊິ່ງໝາຍຄວາມວ່າດື່ມນ້ຳກ່ອນທີ່ຈະລ້າງໜ້າ ແລະ ຖູແຂ້ວ ວິທີນີ້ແມ່ນການລ້າງລຳໄສ້ທີ່ດີ ເພາະການດື່ມນ້ຳໃນຊ່ວງເວລາທີ່ທ້ອງວ່າງ ຈະເປັນການທຳຄວາມສະອາດລຳໄສ້ ແລະ ກະຕຸ້ນລຳໄສ້ຕາມທຳມະຊາດ ເຮັດໃຫ້ຂັບຖ່າຍເປັນປົກກະຕິ ທັງເປັນການລ້າງສານພິດ ຫລື ສິ່ງເສດເຫລືອທີ່ຕົກຄ້າງໃນຮ່າງກາຍນຳອີກ.

2. ດື່ມນ້ຳອຸ່ນປະສົມນ້ຳໝາກນາວ.

ແນະນຳໃຫ້ດື່ມຕອນເຊົ້າເວລາທີ່ທ້ອງວ່າງ ຈະຊ່ວຍກະຕຸ້ນການຂັບຖ່າຍໄດ້ດີ ເນື່ອງຈາກນ້ຳໝາກນາວຈະກະຕຸ້ນໃຫ້ລຳໄສ້ໃຫ້ເກີດການບີບຮັດ ແລະ ຖ້າດື່ມນ້ຳອຸ່ນປະສົມນ້ຳໝາກນາວ ຈະຊ່ວຍກະຕຸ້ນໃຫ້ລຳໄສ້ເຮັດວຽກໄດ້ດີຍິ່ງຂຶ້ນ.

3. ດື່ມນົມສົ້ມ.

ການດື່ມນົມສົ້ມທີ່ມີປະໂຫຍດຕໍ່ການຂັບຖ່າຍແມ່ນຊ່ວງໄລຍະເວລາ 5-7 ໂມງເຊົ້າ ເພາະລຳໄສ້ໃຫຍ່ກຳລັງເຮັດວຽກ ແລະ ເລືອກດື່ມນົມສົ້ມທີ່ບົ່ມດ້ວຍຈຸລິນຊີທຳມະຊາດ ຈະຊ່ວຍເຮັດໃຫ້ລະບົບຍ່ອຍອາຫານເຮັດວຽກໄດ້ດີ ໂດຍສະເພາະເພື່ອກະຕຸ້ນລະບົບຍ່ອຍອາຫານໃນຕອນເຊົ້າ ຈະຊ່ວຍແກ້ໄຂບັນຫາຖ່າຍຍາກໄດ້ເປັນຢ່າງດີ.

4. ໂຍຄະເບົາ

ສຳລັບທ່ານທີ່ມັກອອກກຳລັງກາຍ ແນະນຳໃຫ້ເຮັດຫລິ້ນໂຍຄະແບບເບົາໆໃນຕອນເຊົ້າ ວິທີການນີ້ຍັງຊ່ວຍກະຕຸ້ນລະບົບຂັບຖ່າຍໄດ້ ເນື່ອງຈາກວ່າໂຍຄະຊ່ວຍຜ່ອນຄາຍກ້າມຊີ້ນ ແລະ ປັບສົມດຸນໃນຮ່າງກາຍ ທັງກະຕຸ້ນການເຮັດວຽກຂອງລຳໄສ້ນຳອີກ ດັ່ງນັ້ນ, ຈຶ່ງຊ່ວຍໃຫ້ຂັບຖ່າຍສະດວກ.

5. ຂັບຖ່າຍໃນທ່ານັ່ງທີ່ຖືກຕ້ອງ.

ການນັ່ງໃນທ່າທີ່ຖືກຕ້ອງສາມາດຊ່ວຍກະຕຸ້ນການເຮັດວຽກຂອງລຳໄສ້ໃນຕອນເຊົ້າ ທ່ານັ່ງທີ່ເໝາະສົມສຳລັບການຂັບຖ່າຍແມ່ນນັ່ງຢອງຢໍ້ ໂດຍທີ່ຫົວເຂົ່າຕ້ອງຢູ່ສູງກວ່າກະໂພກ ແຕ່ເນື່ອງຈາກລັກສະນະຂອງຫ້ອງນ້ຳ ທ່ານັ່ງໃນການຂັບຖ່າຍຕ້ອງນັ່ງຕັ້ງສາກ 90 ອົງສາ ດັ່ງນັ້ນ, ແນະນຳໃຫ້ເອົາຕັ່ງມາຍອງຢູ່ທາງຫນ້າເພື່ອວາງຕີນ ແລະ ເພື່ອໃຫ້ຫົວເຂົ່າຢູ່ສູງກວ່າກະໂພກ ໃນມຸມ 35 ອົງສາ ແລະ ອຽງໄປທາງໜ້າເລັກນ້ອຍ ທ່ານັ່ງນີ້ຈະຊ່ວຍໃຫ້ຂັບຖ່າຍງ່າຍຂຶ້ນ ຖືວ່າເປັນການກະຕຸ້ນການຂັບຖ່າຍໃນຕອນເຊົ້າ ທີ່ທ່ານຄວນທົດລອງ.

www.sanook.com

ວັດທະສະພາສາກົນ

# ປະທານາທິບໍດີສີລັງກາ ຈະແຕ່ງຕັ້ງນາຍົກລັດຖະມົນຕີຄົນໃໝ່

ແປ ແລະ ຮຽບຮຽງ: ນາງ ປາກາລັກ ພົມມີໄຊ



ອີງຕາມການລາຍງານຂ່າວ ເມື່ອວັນພະຫັດທີ 12 ພຶດສະພາຜ່ານມາ ໃຫ້ຮູ້ວ່າ: ທ່ານ ໂຄຖາບາຫະຍະ ຣາຊະປັກຊະ ປະທານາທິບໍດີຂອງສີລັງກາ ມີກຳນົດແຕ່ງຕັ້ງນາຍົກລັດຖະມົນຕີຄົນໃໝ່ ໂດຍຄັດເລືອກເອົາຜູ້ທີ່ໄດ້ຮັບຄວາມໄວ້ວາງໃຈຈາກສະມາຊິກລັດຖະສະພາ. ພ້ອມກັນນັ້ນ, ທ່ານຍັງໃຫ້ຮູ້ວ່າ ຈະສືບຕໍ່ແກ້ໄຂລັດຖະທຳມະນູນ ສະບັບທີ 19.

ລັດຖະທຳມະນູນ ສະບັບທີ 19 ໄດ້ມີການຈຳກັດສິດອຳນາດຂອງປະທານາທິບໍດີ ໄດ້ຖືກປ່ຽນແທນໂດຍລັດຖະທຳມະນູນສະບັບທີ 20 ໃນປີ 2020 ເຊິ່ງໄດ້ໃຫ້ອຳນາດບໍລິຫານຕໍ່ປະທານາທິບໍດີມີ ຢ່າງກວ້າງຂວາງ.

ທ່ານ ໂຄຖາບາຫະຍະ ຣາຊະປັກຊະ ປະທານາທິບໍດີ ກ່າວວ່າ: "ນາຍົກລັດຖະມົນຕີຄົນໃໝ່ ແລະ ຄະນະລັດຖະບານ ສາມາດສະເໜີແຜນການສ້າງສະຖຽນລະພາບຂອງປະເທດໄດ້, ຕໍ່ກັບການຮຽກຮ້ອງຂອງປະຊາຊົນຈຳນວນໜຶ່ງທີ່ຕ້ອງການໃຫ້ປະທານາທິບໍດີລາອອກ, ຂ້າພະເຈົ້າຈະພິຈາລະນາຫລັງຈາກປຶກສາຫາລືກັບທຸກພາກສ່ວນທີ່ກ່ຽວຂ້ອງ ເຫັນວ່າໃນປັດຈຸບັນປະເທດກຳລັງປະເຊີນກັບວິກິດການທີ່ຮ້າຍແຮງ ແລະ ຮຽກຮ້ອງໃຫ້ປະຊາຊົນຮ່ວມມືເພື່ອໃຫ້ກົນໄກບໍລິຫານຂອງປະເທດດຳເນີນໄປຕໍ່ໄດ້".

**ແຫລ່ງຂໍ້ມູນ: RYT9**

# ຫວຽດນາມ ສະໜອງໄຟຟ້າຮັບໃຊ້ຊີເກມ ຄັ້ງທີ 31 ຕະຫລອດ 24 ຊົ່ວໂມງ

ແປ ແລະ ຮຽບຮຽງ: ທອມສະນິດ

ງານມະຫາກຳກິລາອາຊີຕາເວັນອອກສ່ຽງໃຕ້ ຄັ້ງທີ 31 (ຊີເກມ 31) ແມ່ນເຫດການກິລາສຳຄັນປະກອບສ່ວນເພີ່ມທະວີການພົວພັນຮ່ວມມືມິດຕະພາບ ແລະ ແມ່ນໂອກາດເພື່ອໂຄສະນາເຜີຍແຜ່ປະເທດຫວຽດນາມຢ່າງກວ້າງຂວາງໃນພາກພື້ນ ແລະ ໃນໂລກ; ດັ່ງນັ້ນ, ທຸກວຽກງານຈັດຕັ້ງຕ້ອງໄດ້ຮັບການກະກຽມຢ່າງລະອຽດລະອໍ, ຮອບຄອບຖີ່ຖ້ວນ ເຊິ່ງມາຮອດປັດຈຸບັນ, ວຽກງານຮັບປະກັນການສະໜອງໄຟຟ້າຢ່າງປອດໄພ, ໝັ້ນຄົງ ແລະ ມີຄຸນນະພາບ ເພື່ອຮັບໃຊ້ໃຫ້ແກ່ງານກິລາສຳຄັນຄັ້ງນີ້ແມ່ນໄດ້ກຽມພ້ອມສຳເລັດແລ້ວ.

ງານກິລາຊີເກມ ຄັ້ງທີ 31 ມີ 40 ປະເພດກິລາ, 526 ລາຍການ ແລະ ຄາດວ່າຈະມີຜູ້ເຂົ້າຮ່ວມປະມານ 10.000 ຄົນ ງານກິລາຈະເລີ່ມແຕ່ວັນທີ 12-23 ພຶດສະພາ 2022 ຢູ່ນະຄອນຫລວງຮ່າໂນ້ຍ ແລະ 11 ແຂວງ, ນະຄອນພາກເໜືອ ເຊິ່ງພິທີເປີດ-ປິດ ແລະ ແຂ່ງຂັນ 18 ປະເພດກິລາ ແມ່ນຈະຈັດຂຶ້ນທີ່ຮ່າໂນ້ຍ ໂດຍຮັບປະກັນສະໜອງໄຟຟ້າໃນບໍລິເວນນະຄອນ, ກຸ່ມບໍລິສັດໄຟຟ້ານະຄອນຮ່າໂນ້ຍ EVNHANOI ໄດ້ກຽມພ້ອມບັນດາມາດຕະການຮັບປະກັນສະໜອງໄຟຟ້າຮັບໃຊ້ງານກິລາດັ່ງກ່າວ ຢ່າງປອດໄພ ແລະ ໝັ້ນຄົງ ໂດຍສະເພາະແມ່ນສະຖານທີ່ເປີດ-ປິດ, ບັນດາສະຖານທີ່ແຂ່ງຂັນ, ເຝິກແອບ ແລະ ພັກເຊົາ.

ເພື່ອກວດກາ, ທົດລອງນຳໃຊ້ຈັກປັ່ນໄຟຟ້າ ແລະ ລະບົບໄຟຟ້າບັນດາບໍລິສັດໄຟຟ້າໄດ້ເປັນເຈົ້າການເຮັດວຽກກັບບັນດາອົງການ, ອຳນາດການປົກຄອງທ້ອງຖິ່ນ ເພື່ອອັບເດດຂໍ້ມູນກ່ຽວກັບສະຖານທີ່ເຝິກແອບ, ແຂ່ງຂັນ, ບັນດາບ່ອນຮັບໃຊ້ການເຄື່ອນໄຫວທີ່ກ່ຽວຂ້ອງ, ບ່ອນກິນຢູ່ພັກເຊົາຂອງບັນດາຄະນະແຂກສາກົນ, ບັນດາສະຖານທີ່ຮັບໃຊ້ເຫດການຕ່າງໆແມ່ນໄດ້ສະໜອງໄຟຟ້າດ້ວຍລະບົບຕາຂ່າຍໄຟຟ້າ ແລະ ຈັກປັ່ນໄຟຟ້າ; ທຸກຫົວໜ່ວຍຂຶ້ນກັບ VNHANOI ເຊິ່ງມີການເວນຍາມ, ແກ້ໄຂເຫດການ ແລະ ສ້ອມແປງໄຟຟ້າ 24 ຊົ່ວໂມງ ໃນຕະຫລອດໄລຍະຂອງການດຳເນີນງານກິລາ.











# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 04 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2021

**ກົດໝາຍ**
**ວ່າດ້ວຍຍານພາຫະນະທາງບົກ**

**ພາກທີ I**
**ບົດບັນຍັດທົ່ວໄປ**

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານຍານພາຫະນະທາງບົກ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ, ທັນສະໄໝ, ເອກະພາບ ແລະ ລວມສູນ, ແນໃສ່ຮັບປະກັນຄວາມສະດວກ, ຖືກຕ້ອງ ແລະ ໂປ່ງໃສ, ເປັນລະບຽບຮຽບຮ້ອຍ, ປົກປ້ອງຊີວິດ, ຊັບສິນ, ຜົນປະໂຫຍດຂອງ ບຸກຄົນ, ນິຕິບຸກຄົນ ແລະ ສາທາລະນະ, ສາ ມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ຍານພາຫະນະທາງບົກ**

ຍານພາຫະນະທາງບົກ ແມ່ນ ລົດທຸກປະເພດທີ່ແລ່ນດ້ວຍເຄື່ອງຈັກ ທີ່ມີສອງລໍ້ຂຶ້ນໄປ ມີຄົນຂັບ ແລະ ບໍ່ມີຄົນຂັບ ຊຶ່ງໄດ້ອອກແບບ, ປະກອບ ແລະ ຜະລິດ ຕາມມາດຕະຖານເຕັກນິກ ໂດຍນຳໃຊ້ນ້ຳມັນເຊື້ອໄຟ, ອາຍແກັສ, ແສງອາທິດ, ໄຟຟ້າ ແລະ ໄນໂຕຣເຈນ ເປັນພະລັງງານຂັບເຄື່ອນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ພະລັງງານສະອາດ ໝາຍເຖິງ ພະລັງງານໄຟຟ້າ, ໄນໂຕຣເຈນ ແລະ ແສງອາທິດ;

2. ຊິ້ນສ່ວນ ໝາຍເຖິງ ຜະລິດຕະພັນ ຫຼື ອົງປະກອບຕ່າງໆ ທີ່ຈະນຳມາປະກອບລົດໃນໂຮງງານໂດຍໄດ້ຮັບການອອກແບບ ແລະ ຜະລິດຈາກໂຮງງານໂດຍກົງ;

3. ຊີບີຢູ (Completely Built Unit-CBU) ໝາຍເຖິງ ຍານພາຫະນະທາງບົກທີ່ນຳເຂົ້າເປັນຄັນ;

4. ອາໄຫຼ່ ໝາຍເຖິງ ຜະລິດຕະພັນ ຫຼື ອົງປະກອບຕ່າງໆ ສຳລັບປ່ຽນຖ່າຍ ຂອງລົດທີ່ໄດ້ຮັບອອກແບບຈາກໂຮງງານຜູ້ຜະລິດ;

5. ຊີໂອພີ (Conformity of Production-COP) ໝາຍເຖິງ ການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຂະບວນການຜະລິດ;

6. ເລກຈັກ ໝາຍເຖິງ ຕົວເລກ ຫຼື ລະຫັດປະຈຳໜ່ວຍຈັກ;

7. ເລກຖັງລົດ (Vehicle Identification Number-VIN) ໝາຍເຖິງ ລະຫັດຂອງຍານພາຫະ ນະທີ່ບົ່ງບອກ ປະເທດຜະລິດ, ຍີ່ຫໍ້, ປະເພດ, ປີຜະລິດ ແລະ ລຳດັບການຜະລິດ ຂອງຍານພາຫະນະ ຕາມມາດຕະຖານສາກົນ;

8. ອອບໂຣດ (Off Road) ໝາຍເຖິງ ຍານພາຫະນະທີ່ ຜ່ານການອອກແບບ ຫຼື ດັດແປງ ຮູບຮ່າງພາຍນອກ ສຳລັບນຳໃຊ້ ໃນການສຳຫຼວດ, ກິລາ, ໃນເຂດທຸລະກັນດານ ຫຼື ພື້ນທີ່ສະເພາະ;

9. ຖັງລົດ ໝາຍເຖິງ ໂຄງສ້າງຫຼັກຂອງລົດ;

10. ໃບທະບຽນຍານພາຫະນະ ໝາຍເຖິງ ເອກະສານປະຈຳ ຍານພາຫະນະທາງບົກ ທີ່ກຳນົດ ຊື່, ທີ່ຢູ່, ຂໍ້ມູນທາງດ້ານເຕັກນິກ ແລະ ເລກປ້າຍທະບຽນຍານພາຫະນະທາງບົກ;

11. ຄາບອນໂມນ໋ອກໄຊ໌ (CO) ໝາຍເຖິງ ອາຍພິດທີ່ ບໍ່ມີສີ ແລະ ບໍ່ມີກິ່ນ ຊຶ່ງເກີດມາຈາກການເຜົາ ໄໝ້ຂອງເຄື່ອງຈັກທີ່ນຳໃຊ້ພະລັງງານນ້ຳມັນກາຊວນ ຊຶ່ງມີຜົນກະທົບຕໍ່ສຸຂະພາບ;

12. ໄຮໂດຣຄາບອນ (HC) ໝາຍເຖິງ ອາຍພິດທີ່ ບໍ່ມີສີ ແລະ ບໍ່ມີກິ່ນ ຊຶ່ງເກີດມາຈາກການເຜົາໄໝ້ຂອງເຄື່ອງຈັກທີ່ນຳໃຊ້ພະລັງງານນ້ຳມັນແອັດຊັງ ຊຶ່ງມີຜົນກະທົບຕໍ່ສຸຂະພາບ;

13. ຜະລິດຕະພັນ ໝາຍເຖິງ ລົດ, ຊິ້ນສ່ວນ ແລະ ອາໄຫຼ່ປ່ຽນຖ່າຍ;

14. ແວ່ນ ໝາຍເຖິງ ວັດສະດຸທີ່ເຮັດມາຈາກແກ້ວ ແລະ ສານຊິລິຄອນທີ່ສາມາດຫຼອມເປັນຮູບໄດ້ ເມື່ອເຢັນໂຕແລ້ວ ມີລັກສະນະໃສ ແລະ ແຂງ ຊຶ່ງນຳໄປປະກອບໃສ່ດ້ານ ໜ້າ, ຂ້າງ ແລະ ຫຼັງ ລົດ ເພື່ອໃຫ້ແນມເຫັນ, ປ້ອງກັນລົມ, ນ້ຳ, ຝຸ່ນ ແລະ ອື່ນໆ;

15. ກະຈົກ ໝາຍເຖິງ ວັດສະດຸທີ່ມີຄວາມສາມາດໃນການສະທ້ອນຮູບພາບ ເພື່ອໃຫ້ແນມເຫັນພາບສະທ້ອນໄດ້ຊັດເຈນ ຊຶ່ງນຳໄປປະກອບໃສ່ໃນຫ້ອງໂດຍສານ ແລະ ດ້ານຂ້າງ, ທ້າຍລົດ ເພື່ອໃຫ້ແນມເຫັນທາງຫຼັງ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຍານພາຫະນະທາງບົກ**

ລັດ ສົ່ງເສີມ ວຽກງານຍານພາຫະນະທາງບົກ ດ້ວຍການ ທົດສອບ ແລະ ວິໄຈ, ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ກ້າວໜ້າ ແລະ ທັນສະໄໝ, ພັດທະນາບຸກຄະລາກອນ, ສະໜອງງົບປະມານ ແລະ ວັດຖຸປະກອນທີ່ຈຳເປັນ ເຂົ້າໃນວຽກງານດັ່ງກ່າວ.

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນກ່ຽວກັບການປະກອບ, ຜະລິດ, ສົ່ງອອກ ແລະ ຈຳໜ່າຍ ຍານພາຫະນະທາງບົກທຸກປະເພດ ລວມທັງການນຳເຂົ້າກົນຈັກກະສິກຳ.

ລັດ ສົ່ງເສີມ ການນຳໃຊ້ຍານພາຫະນະທາງບົກ ທີ່ນຳໃຊ້ພະລັງງານສະອາດ, ເປັນມິດຕໍ່ສິ່ງແວດລ້ອມ ແລະ ມີຄວາມປອດໄພຕໍ່ສຸຂະພາບ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຍານພາຫະນະທາງບົກ**

ວຽກງານຍານພາຫະນະທາງບົກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບແນວທາງ ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດ ແລະ ແຜນດຳເນີນງານຄວາມປອດໄພທາງຫຼວງ;

2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

ອ່ານຕໍ່ສະບັບໜ້າ...




**ກົດໝາຍວ່າດ້ວຍ**
**ຍານພາຫະນະທາງບົກ**

10. ໃບທະບຽນຍານພາຫະນະ ໝາຍເຖິງ ເອກະສານປະຈຳ ຍານພາຫະນະທາງບົກ ທີ່ກຳນົດ ຊື່, ທີ່ຢູ່, ຂໍ້ມູນທາງດ້ານເຕັກນິກ ແລະ ເລກປ້າຍທະບຽນຍານພາຫະນະທາງບົກ;

11. ຄາບອນໂມນ໋ອກໄຊ໌ (CO) ໝາຍເຖິງ ອາຍພິດທີ່ ບໍ່ມີສີ ແລະ ບໍ່ມີກິ່ນ ເຊິ່ງເກີດມາຈາກການເຜົາ ໄໝ້ຂອງເຄື່ອງຈັກທີ່ນຳໃຊ້ພະລັງງານນ້ຳມັນກາຊວນ ເຊິ່ງມີຜົນກະທົບຕໍ່ສຸຂະພາບ;







| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສົງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ<br>ທ່ານ ວິເສດ ສະແຫວງສຶກສາ<br>ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ປອ. ພົດສະໄໝ ບຸນວິໄລ<br>ທ່ານ ຂັນທະວີ ວົງພະຈັນ | ທ່ານ ນາງ ກົງໃຈ ແສງອຳພັນ<br>ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ນາງ ໄຊໂສພາພອນ ມົ່ງມູງຄຸນ | ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ສົມນຶກ ແກ້ວໄຊຍະຈັກ |